# ຄູ່ມືການສອນ

# ຄູ່ມືການສອນ

ຈັດພິມໂດຍ
ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ
ເມືອງຊອລເລັກ, ຢູທາ

© ໒໐໐໑ ໂດຍ Intellectual Reserve, Inc.
ສງວນລິຂະສິດທຸກປະການ.
ຈັດພິມໃນສະຫະຣັດອະເມຣິກາ.

ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: ໘/໐໑
ການແປໄດ້ຮັບອະນຸຍາດ: ໘/໐໑

Printed in the United States of America

ແປຈາກ *Teaching Guidebook*

Laotian

# ສາຣະບານ


| | |
|---|---|
| ຄຳນຳ | ໑ |
| ການຕຽມຕົວເອງທາງວິນຍານ | ໕ |
| ການສອນຢ່າງທີ່ພຣະເຢຊູຊົງສອນ | ໖ |
| ການໃຊ້ວິທີສອນໃນຫລາຍແບບ | ໑໒ |
| ການຕຽມບົດຮຽນຂອງທ່ານ | ໑໗ |
| ການມີຄວາມເຂົ້າໃຈຄົນທີ່ທ່ານສອນ | ໒໑ |
| ຣາງວັນທີ່ມາຈາກການສອນ | ໒໔ |
| ການດູແລພັດທະນາຄູສອນໃນສາຂາ | ໒໖ |
| ໂຄງຮ່າງສຳລັບຫ້ອງຮຽນພັດທະນາຄູສອນ | ໒໙ |
| ການສັ່ງຈອງອຸປກອນການສອນຂອງສາສນາຈັກແລະການຊອກຫາລາຍລະອຽດກ່ຽວກັບ ລຳດັບເຊື້ອສາຍ | ໕໒ |


## ການແຈກຢາຍ

*ຄູ່ມືການສອນ* ເຫລັ້ມນີ້ແມ່ນສຳລັບໃຊ້ກັບອຸປກອນການສອນຂັ້ນພື້ນຖານ ແລະຈະມີຜົນປໂຍດຫລາຍສຳລັບຄູສອນແລະສະມາຊິກຄົນອື່ນໆທີ່ຈະໃຊ້ມັນນຳອຸປກອນການສອນທົ່ວໄປ (ເບິ່ງໃນຫນັງສື *ລາຍລະອຽດສຳລັບຜູ້ນຳຖານະປະໂຣຫິດແລະຜູ້ນຳຂອງອົງການຕ່າງໆກ່ຽວກັບອຸປກອນການສອນ* [36363]). ຄູ່ມືເຫລັ້ມນີ້ສາມາດຊ່ວຍສະມາຊິກໃນການສອນໃນບ້ານແລະໃນອົງການຕ່າງໆ ໃນສາສນາຈັກໄດ້. ຄູສອນແຕ່ລະຄົນຄວນໄດ້ຮັບຫົວນຶ່ງ. ຫົວຫນ້າຄອບຄົວກໍຈະເຫັນວ່າມັນໃຊ້ໄດ້ເປັນປໂຍດຄືກັນ.

# ຄຳນຳ

ຄູ່ມືເຫລັ້ມນີ້ຖືກຈັດຂຶ້ນສຳລັບບິດາມານດາ, ຜູ້ນຳ, ແລະຄູສອນ. ທ່ານຍັງສາມາດໃຊ້ມັນເພື່ອເປັນສິ່ງຊ່ວຍເຫລືອທ່ານພັດທະນາການເປັນຄູສອນຂອງທ່ານໄດ້. ທ່ານສາມາດໃຊ້ປຶ້ມຫົວນີ້ ເປັນພື້ນຖານສຳລັບການສອນຫ້ອງຮຽນພຣະກິດຕິຄຸນຂອງທ່ານໄດ້ ແລະສຳລັບການສອນຫ້ອງຮຽນພັດທະນາຄູສອນໄດ້ (ເບິ່ງ ໜ້າ ໘໗).

ພຣະເຈົ້າຊົງສອນເຮົາ

ໃຫ້ສອນຄຳສອນຂອງອານາຈັກຂອງພຣະອົງໃຫ້ເຊິ່ງກັນແລະກັນ.

ພຣະອົງຊົງຕັສວ່າ ເຮົາຄວນສອນຢ່າງພາກພຽນ ແລະພຣະຄຸນຂອງພຣະອົງຈະຢູ່ກັບເຮົາ ເພື່ອວ່າເຮົາຈະໄດ້ຮັບການແນະນຳຢ່າງສົມບູນຍິ່ງຂຶ້ນໃນທິດສະດີ, ໃນຫລັກທັມ, ໃນຄຳສອນ, ໃນກົດຂອງພຣະກິດຕິຄຸນ, ໃນທຸກສິ່ງທັງປວງທີ່ກ່ຽວກັບອານາຈັກຂອງພຣະຜູ້ເປັນເຈົ້າ ທີ່ສົມຄວນສຳລັບເຮົາທີ່ຈະເຂົ້າໃຈ (see D&C 88:77–78).



ບ້ານຄວນເປັນບ່ອນທີ່ຈະເລີ້ມຕົ້ນການສອນນີ້. ບ້ານເຮືອນຈະເຂັ້ມແຂງຂຶ້ນຈາກການສອນແລະການຮຽນທີ່ເກີດຂຶ້ນໃນໂບດ. ເຮົາທຸກຄົນມີໜ້າທີ່ຮັບຜິດຊອບທີ່ຈະສອນໃນບ້ານແລະໃນໂບດ ແລະໃຫ້ແກ່ຄົນບ້ານໃກ້ເຮືອນຄຽງ ແລະຄົນທີ່ເຮົາພົບປະດ້ວຍໃນແຕ່ລະວັນ. ເຮົາສອນໃນຖານະເປັນບິດາມານດາ, ເປັນລູກຊາຍ, ເປັນລູກສາວ, ເປັນສາມີ, ເປັນພັລຍາ, ເປັນອ້າຍນ້ອງ, ແລະເປັນເອື້ອຍນ້ອງ. ເຮົາສອນໃນຖານະເປັນຜູ້ນຳໃນສາສນາຈັກ, ເປັນຄູສອນໃນຫ້ອງຮຽນ, ເປັນຄູສອນປະຈຳບ້ານ, ແລະເປັນຜູ້ຢ້ຽມສອນ. ເຮົາຍັງສອນອີກໃນຖານະເປັນເພື່ອນທຳງານດ້ວຍ, ເປັນຄົນບ້ານໃກ້ເຮືອນຄຽງ, ແລະເປັນໝູ່ເພື່ອນ. ບາງຄັ້ງເຮົາສອນໂດຍສິ່ງທີ່ເຮົາເວົ້າອອກມາແລະໂດຍປະຈັກພະຍານທີ່ເຮົາກ່າວ, ແຕ່ຫລາຍໆຄັ້ງເຮົາກໍໄດ້ສອນໂດຍຕົວຢ່າງຂອງເຮົາ.

ຢູ່ແຄມຝັ່ງທະເລຄາລີເລ, ພຣະເຈົ້າທີ່ຊົງຟື້ນພຣະຊົນແລ້ວ ຊົງໄດ້ສັ່ງເປໂຕວ່າ, "ຈົ່ງລ້ຽງແກະຂອງເຮົາເນີ" (ໂຢຮັນ ໒໑:໑໕–໑໗). ການຮຽກຮ້ອງໃຫ້ສອນຂອງເຮົານີ້ໄດ້ຂໍຮ້ອງໃຫ້ເຮົາບຳຣຸງລ້ຽງຈິດວິນຍານຂອງຄົນອື່ນດ້ວຍຄວາມຈິງຂອງພຣະກິດຕິຄຸນແລະໂດຍການນຳພາເຂົາເຈົ້າເຂົ້າຫາພຣະຜູ້ຊ່ວຍໃຫ້ລອດ (ເບິ່ງ ໂມໂຣໄນ ໕:໔). ຂໍໃຫ້ເຮົາຄິດວ່າ ການສອນພຣະກິດຕິຄຸນນີ້ຈະເປັນສິ່ງຊ່ວຍນຳຄວາມລອດມາໃຫ້ລູກໆຂອງພຣະບິດາເທິງສວັນ. ມີໜ້າທີ່ອື່ນໃດບໍ່ທີ່ເປັນກຽດແລະສັກສິດຫລາຍໄປກວ່ານີ້?

ຖ້າທ່ານເປັນບິດາຫລືມານດາຫລືເປັນຄູສອນໃຫມ່, ທ່ານອາດຄິດເປັນຫ່ວງກ່ຽວກັບຫນ້າທີ່ນີ້. ຂໍໃຫ້ທ່ານຈໍາໄວ້ວ່າ ພຣະເຈົ້າພ້ອມສເມີທີ່ຈະຊ່ວຍເຫລືອທ່ານ. ພຣະອົງຊົງສັນຍາໄວ້ວ່າ ຖ້າເຮົາຫາກຖ່ອມຕົນແລະມີສັດທາ, ພຣະອົງຈະເຮັດໃຫ້ສິ່ງທີ່ອ່ອນແອກາຍເປັນສິ່ງເຂັ້ມແຂງຕໍ່ເຮົາໄດ້ (see Ether 12:27). ໃນຄວາມພະຍາຍາມທີ່ຈະເປັນຄູສອນຂອງເຮົາ, ເຮົາສາມາດອີງຕໍ່ໃສ່ປະສົບການແລະຄວາມຊໍານານທີ່ເຮົາໄດ້ພັດທະນາມາໃນຊີວິດ. ຄວາມສາມາດຂອງເຮົາຈະເພີ້ມຂຶ້ນເລື້ອຍໆເມື່ອເຮົາຕຽມການສອນຂອງເຮົາເປັນຢ່າງດີ, ເມື່ອເຮົາພະຍາຍາມເພີ້ມກໍາລັງໃຫ້ຜູ້ທີ່ເຮົາສອນ, ແລະໄວ້ວາງໃຈໃນພຣະເຈົ້າ.

# ການຕຽມຕົວເອງທາງວິນຍານ



ໃນຂະນະທີ່ທ່ານຕຽມຕົວທ່ານເອງທາງວິນຍານ, ພຣະວິນຍານ ຫລືພຣະວິນຍານບໍຣິສຸດ ຈະນຳພາ ແລະຊ່ວຍເຫລືອທ່ານໃນການສອນຂອງທ່ານ. ເຮົາຈຳຕ້ອງມີພຣະວິນຍານບໍຣິສຸດຢູ່ນຳ ເວລາເຮົາ



ສອນຫລັກທັມແລະຄວາມຈິງຂອງພຣະກິດຕິຄຸນ. ພຣະເຈົ້າຊົງຕັສວ່າ ເຮົາຈະໄດ້ຮັບພຣະວິນຍານ ໂດຍການອະທິຖານດ້ວຍສັດທາ, ແລະວ່າຖ້າ ເຮົາບໍ່ໄດ້ຮັບພຣະວິນຍານ ເຮົາກໍບໍ່ຄວນສອນ (see D&C 42:14).

## ຮັບການແຕ່ງຕັ້ງເປັນທາງການ

ເມື່ອທ່ານຖືກຮຽກຮ້ອງໃຫ້ເປັນຄູສອນ, ທ່ານຄວນໄດ້ຮັບການແຕ່ງຕັ້ງແລະໄດ້ຮັບພອນພິເສດຈາກຜູ້ນຳຖານະປະໂຣຫິດເສັຽກ່ອນ. ພອນນີ້ຈະຊ່ວຍທ່ານເຮັດໜ້າທີ່ຂອງທ່ານໃຫ້ສຳເຣັດ. ເມື່ອທ່ານໃຊ້ຄວາມພະຍາຍາມຈົນສຸດຄວາມສາມາດທີ່ຈະຮັບໃຊ້ໃນໜ້າທີ່ການສອນຂອງທ່ານແລ້ວ,

ພຣະເຈົ້າຈະເພີ້ມພູນຄວາມສາມາດຂອງທ່ານທີ່ຈະເປັນແນວທາງໃຫ້ຄົນອື່ນເຮັດຄວາມດີ. ພ້ອມນີ້ ພຣະອົງຍັງຈະເພີ້ມຄວາມສາມາດໃຫ້ທ່ານຫລາຍກວ່າທີ່ທ່ານມີຢູ່ເມື່ອເຖິງເວລາທີ່ທ່ານຄວນຈະມີ.

## ສແວງຫາການຊົງນຳຈາກພຣະວິນຍານບໍຣິສຸດ

ເມື່ອທ່ານສອນ ຈົ່ງສແວງຫາຄວາມຊ່ວຍເຫລືອຈາກພຣະວິນຍານບໍຣິສຸດ. ພຣະອົງສາມາດຊ່ວຍທ່ານໃຫ້ເຂົ້າໃຈຄວາມຕ້ອງການຂອງຄົນທີ່ທ່ານສອນແລະຊ່ວຍທ່ານຕຽມບົດຮຽນໃຫ້ເໝາະສົມກັບຄວາມຕ້ອງການເຫລົ່ານັ້ນ. ພຣະອົງຈະປ່ຽນຈິດໃຈຂອງທ່ານໃຫ້ອ່ອນນ້ອມແລະຕຽມຈິດໃຈຂອງທ່ານ ເພື່ອຈະໄດ້ຮັບເອົາການດົນໃຈແລະການຊົງນຳຕື່ມອີກ.

## ອະທິຖານເລື້ອຍໆ



ໃຫ້ອະທິຖານເລື້ອຍໆແລະທູນຂໍໃຫ້ພຣະເຈົ້າປະທານພອນໃຫ້ແກ່ທ່ານໃນຂະນະທີ່ທ່ານສຶກສາແລະຕຽມບົດຮຽນ. ບາງຄັ້ງທ່ານກໍຄວນອົດອາຫານນຳ. ຈົ່ງອະທິຖານເພື່ອຄວາມເຂົ້າໃຈແລະເພື່ອຈະໄດ້ ມີຄວາມຮັກຕໍ່ທຸກຄົນທີ່ທ່ານສອນ. ຈົ່ງຮຽນທີ່ຈະຮູ້ຈັກກະທຳຕາມການດົນໃຈຂອງພຣະວິນຍານບໍຣິສຸດທີ່ທ່ານໄດ້ຮັບ.

## ສຶກສາພຣະຄັມພີ

ຈົ່ງສຶກສາພຣະຄັມພີດ້ວຍການອະທິຖານ. ເມື່ອທ່ານກະທຳເຊັ່ນນີ້, ທ່ານຈະໄດ້ຮຽນຮູ້ກ່ຽວກັບພຣະຜູ້ຊ່ວຍໃຫ້ລອດແລະທ່ານຈະມີຄວາມຮູ້ກ່ຽວກັບຄວາມຈິງຫລາຍຕື່ມຂຶ້ນ. ພຣະວິນຍານບໍຣິສຸດຈະຊ່ວຍທ່ານໃຫ້ເຂົ້າໃຈພຣະຄັມພີແລະເບິ່ງວ່າທ່ານຈະນຳໃຊ້ຂໍ້ພຣະຄັມພີເຫລົ່ານັ້ນໃຫ້ເຂົ້າກັບຄວາມຕ້ອງການຂອງນັກຮຽນຫລືຂອງສະມາຊິກໃນຄອບຄົວຂອງເຂົາເຈົ້າແນວໃດ. ໂດຍການເພີ້ມການອະທິຖານແລະການອົດອາຫານໃສ່ກັບການສຶກສາພຣະຄັມພີຂອງທ່ານ, ທ່ານຈະໄດ້ຮັບພະລັງຫລາຍຂຶ້ນແລະໄດ້ຮັບການນຳພາໂດຍພຣະວິນຍານບໍຣິສຸດໃນການສອນຂອງທ່ານ.

## ດຳລົງຊີວິດຕາມພຣະກິດຕິຄຸນ

ຈົ່ງດຳລົງຊີວິດຕາມຄຳສອນຂອງພຣະກິດຕິຄຸນດ້ວຍສຸດຈິດສຸດໃຈ. ຈົ່ງກັບໃຈຈາກຄວາມຜິດບາບທີ່ຜ່ານມາ. ເມື່ອທ່ານກະທຳເຊັ່ນນີ້, ທ່ານຈະໄດ້ຮັບພະລັງແລະຄວາມເຂົ້າໃຈ. ຄວາມສງົບແລະ

ຄວາມຜາສຸກທີ່ທ່ານຮູ້ສຶກຈາກການພະຍາຍາມທີ່ຈະດຳລົງຊີວິດຕາມພຣະກິດຕິຄຸນ ຈະເປັນຫລັກຖານພະຍານໃຫ້ຄົນອື່ນເຫັນເຖິງຕົວທ່ານ. ເຂົາເຈົ້າຈະຮູ້ສຶກເຖິງຄວາມຈິງໃຈແລະປະຈັກພະຍານແລະພະລັງຂອງຄວາມພະຍາຍາມເປັນຄູສອນຂອງທ່ານ. ເຂົາເຈົ້າຈະຮຽນຈາກຕົວຢ່າງໃນຊີວິດຂອງທ່ານ.

ມີຄູສອນຄົນນຶ່ງຮູ້ສຶກວ່ານາງບໍ່ໄດ້ຮັບການດົນໃຈຈາກພຣະວິນຍານບໍລິສຸດຂະນະທີ່ນາງຕຽມບົດຮຽນຂອງນາງຢູ່. ຂະນະທີ່ນາງອະທິຖານເພື່ອຂໍຄວາມຊ່ວຍເຫລືອ, ນາງຄິດໄດ້ວ່າ ນາງຄຽດໃຫ້ຄົນຂ້າງບ້ານຜູ້ເຮັດບໍ່ດີກັບນາງ. ນາງໄດ້ທູນຕໍ່ພຣະເຈົ້າດ້ວຍຄວາມຖ່ອມເພື່ອໃຫ້ອະພັຍແກ່ນາງ. ມື້ຕໍ່ມານາງໄດ້ໄປຫາຄົນຂ້າງບ້ານແລະໄດ້ຂໍໂທດກັບເຂົາທີ່ນາງມີຄວາມຄຽດຂຶ້ນໃຫ້ເຂົາ. ນາງແລະຄົນຂ້າງບ້ານຄົນນັ້ນໄດ້ກາຍເປັນໝູ່ເພື່ອນທີ່ດີຕໍ່ກັນ ແລະນາງກໍເລີ່ມໄດ້ຮັບການດົນໃຈຈາກພຣະວິນຍານບໍລິສຸດອີກ.

## ເປັນຄົນຖ່ອມຕົນ

ການເປັນຄົນຖ່ອມຕົນສາມາດຊ່ວຍທ່ານໃຫ້ຫລີກລ້ຽງຈາກການສແວງຫາການຍ້ອງຍໍໃຫ້ແກ່ຕົນ ຫລືອີງໃສ່ແຕ່ຄວາມຮູ້ຫລືພອນສວັນຂອງຕົນເອງໄດ້. ທ່ານສາມາດສະແດງຄວາມຖ່ອມຕົນໂດຍການເຮັດຕາມຄຳແນະນຳໃນ ສຸພາສິດ ໓:໕–໖ ມີຄຳວ່າ: "ຈົ່ງໄວ້ວາງໃຈໃນພຣະຜູ້ເປັນເຈົ້າດ້ວຍສຸດຈິດສຸດໃຈຂອງເຈົ້າ. ຢ່າເຊື່ອໝັ້ນຈັກເທື່ອໃນສິ່ງທີ່ເຈົ້າຄິດວ່າເຈົ້າຮູ້ຈັກ. ຈົ່ງລະນຶກເຖິງພຣະຜູ້ເປັນເຈົ້າໃນທຸກສິ່ງທີ່ເຈົ້າກະທຳ ແລະພຣະອົງຈະໃຫ້ເຈົ້າເຫັນຫົນທາງອັນຖືກຕ້ອງ." ພຣະເຈົ້າຊົງສອນໃຫ້ເຮົາເປັນຄົນຖ່ອມ ແລ້ວພຣະອົງ ພຣະຜູ້ເປັນເຈົ້າຂອງເຮົາຈະຈູງມືເຮົາໄປແລະໃຫ້ຄຳຕອບແກ່ຄຳອະທິຖານຂອງເຮົາ (see D&C 112:10).

# ການສອນຢ່າງທີ່ພຣະເຢຊູຊົງສອນ



## ຮັກຜູ້ທີ່ເຮົາສອນ

ໃນລະຍະທີ່ພຣະອົງຊົງໃຊ້ຊີວິດຢູ່ໃນໂລກ, ພຣະຜູ້ຊ່ວຍໃຫ້ລອດຊົງໄດ້ສະແດງຄວາມຮັກອັນຍິ່ງໃຫຍ່ ແລະຄວາມເຂົ້າໃຈຕໍ່ທຸກຄົນ. ພຣະອົງຊົງສອນຄົນຍາກຈົນ, ຄົນຮັ່ງມີ, ຄົນຖືກຂັບໄລ່ໜີ, ແລະຄົນມີບາບ. ພຣະອົງຊົງສອນເຮົາໃຫ້ຮັກທຸກຄົນແລະຊ່ວຍເຫລືອເຊິ່ງກັນແລະກັນ. ພຣະອົງຊົງຕັສວ່າ, "ເຮົາໃຫ້ບັນຍັດໃຫມ່ໄວ້ແກ່ເຈົ້າທັງຫລາຍ ຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນດ້ວຍຢ່າງນັ້ນ" (ໂຢຮັນ ໑໓:໓໔). ເມື່ອເຮົາສະແດງຄວາມຮັກຕໍ່ຄົນທີ່ເຮົາສອນ, ເຂົາເຈົ້າຈະຮູ້ສຶກເຖິງຄວາມສຳຄັນຂອງຕົວເຂົາເຈົ້າເອງຕໍ່ນິຣັນດອນຫລາຍຂຶ້ນ, ເຂົາເຈົ້າຈະມີຄວາມກະຕືລືລົ້ນທີ່ຈະຮຽນຮູ້ຫລາຍຂຶ້ນ, ແລະເຂົາເຈົ້າຈະມີຄວາມວ່ອງໄວຕໍ່ການດົນໃຈຂອງພຣະວິນຍານຫລາຍຂຶ້ນ.

ການເປັນຄູສອນພຣະກິດຕິຄຸນມີຄວາມໝາຍຫລາຍກວ່າການນຳສເນີບົດຮຽນໃນແຕ່ລະອາທິດເທົ່ານັ້ນ. ມັນໝາຍຄວາມວ່າເຮົາຕ້ອງມີຄວາມເປັນຫ່ວງເປັນໄຍຕໍ່ນັກຮຽນໃນຫ້ອງນຳອີກ. ຈົ່ງພະຍາຍາມໃຫ້ຮູ້ຈັກແຕ່ລະຄົນໃນຫ້ອງ. ມັນຈະຊ່ວຍທ່ານໃຫ້ສອນເຂົາເຈົ້າຢ່າງໄດ້ຜົນ. ເຂົາເຈົ້າອາດຕ້ອງການຄວາມຊ່ວຍເຫລືອຈາກທ່ານເມື່ອເຂົາເຈົ້າມີບັນຫາ, ເມື່ອເຂົາເຈົ້າບໍ່ໄດ້ມາຫ້ອງ, ຫລືຖ້າຫາກເຂົາເຈົ້າເປັນຄົນພິການ. ຈົ່ງຈື່ຈຳຄຳອຸປມາຂອງພຣະຜູ້ຊ່ວຍໃຫ້ລອດເຖິງເຣື່ອງແກະທີ່ເສັຽໄປໂຕນຶ່ງ (ເບິ່ງ ລູກາ ໑໕:໓–໗).

ຄູສອນຄົນນຶ່ງເຫັນວ່າເດັກໃນຫ້ອງຄົນນຶ່ງຂອງນາງບໍ່ມັກມາຫ້ອງ ແຕ່ຖ້າຫາກນາງຕິດຕໍ່ໄປບ້ານຂອງເດັກຄົນນັ້ນພາຍໃນອາທິດ ເດັກຄົນນັ້ນຈະມາໂບດໃນວັນອາທິດຕໍ່ໄປ. ນາງໄດ້ໄປເວົ້າລົມກັບພໍ່ແມ່ຂອງເດັກເລື້ອຍໆ ແລະໄດ້ບອກເຖິງຄວາມຮູ້ສຶກຂອງນາງທີ່ມີຕໍ່ເດັກ. ນາງຍັງໄດ້ຊ່ວຍໄປຮັບສົ່ງເດັກຈາກໂຮງຮຽນ ນຳອີກເວລາພໍ່ແມ່ຂອງລາວໄປເຮັດວຽກ ເພື່ອວ່າລາວຈະບໍ່ໄດ້ຂາດໂຮງຮຽນໃນວັນນັ້ນ.



ໃນຖານະເປັນຄູສອນ, ທ່ານຍັງສາມາດຊ່ວຍເປັນຜູ້ຜູກມິດກັບສະມາຊິກຄົນອື່ນໆໄດ້ນຳອີກ ແລະຊ່ວຍເຂົາເຈົ້າໃຫ້ຫມັ້ນຄົງຢູ່ໃນພຣະກິດຕິຄຸນ. ສິ່ງນີ້ແມ່ນສຳຄັນຫລາຍໂດຍສະເພາະກັບຄົນທີ່ເປັນສະມາຊິກໃຫມ່ ແລະກັບສະມາຊິກທີ່ບໍ່ເຂັ້ມແຂງ. ຈົ່ງຊ່ວຍເຂົາເຈົ້າໃຫ້ຮູ້ສຶກໄດ້ຮັບການຕ້ອນຮັບສເມີ. ຈົ່ງຊອກຫາໂອກາດທີ່ຈະໃຫ້ເຂົາເຈົ້າມີສ່ວນຮ່ວມໃນຫ້ອງຮຽນ. ຈົ່ງຕຽມຕົວທ່ານເອງທີ່ຈະສອນເຖິງຄວາມຈິງຂອງພຣະກິດຕິຄຸນດ້ວຍພຣະວິນຍານແລະດ້ວຍຄວາມຮັກ.

## ສອນຄວາມຈິງຂອງພຣະກິດຕິຄຸນ

ພຣະຜູ້ຊ່ວຍໃຫ້ລອດຊົງສອນເຖິງຄວາມຈິງຂອງພຣະກິດຕິຄຸນ. ພຣະອົງຊົງເນັ້ນຫນັກເຖິງຫລັກທັມ ແລະພິທີການຂັ້ນທຳອິດ—ເຊັ່ນ ສັດທາ, ການກັບໃຈ, ການຮັບບັບຕິສະມາ, ແລະການຮັບເອົາພຣະວິນຍານບໍຣິສຸດ. ພຣະອົງຊົງສອນເຮົາໃຫ້ຮັກແລະຮັບໃຊ້ເຊິ່ງກັນແລະກັນ. ພຣະອົງຊົງສອນເຖິງຖານະປະໂຣຫິດ, ພັນທະສັນຍາ, ແລະພິທີການຕ່າງໆ, ແລະເຖິງທຸກສິ່ງທັງປວງທີ່ເຮົາຄວນຮູ້ຄວນກະທຳ ເພື່ອຈະໄດ້ເຂົ້າຫາພຣະອົງ. ເຮົາກໍຄວນສອນພຣະກິດຕິຄຸນດັ່ງທີ່ໄດ້ເປີດເຜີຍໄວ້ໃນພຣະຄັມພີແລະຕາມຄຳຂອງສາສດາໃນຍຸກສຸດທ້າຍ. ເຮົາບໍ່ຄວນສອນເຣື່ອງທີ່ເປັນຝ່າຍໂລກ, ບໍ່ຄວນໃຫ້ຄວາມຄິດຄວາມເຫັນສ່ວນຕົວ, ແລະບໍ່ຄວນສອນສິ່ງທີ່ເຮົາບໍ່ຮູ້ແນ່ນອນ ແລະບໍ່ຄວນຫາເຣື່ອງທີ່ຜູ້ຄົນຕ້ອງຖົກຖຽງກັນມາສອນ.

ພຣະຜູ້ຊ່ວຍໃຫ້ລອດຊົງໃຊ້ຄຳທີ່ງ່າຍໆເມື່ອພຣະອົງສອນພຣະກິດຕິຄຸນ. ພຣະອົງຊົງໃຊ້ຄຳທີ່ແຈ່ມແຈ້ງ ແລະພາສາທີ່ຜູ້ຄົນເຂົ້າໃຈງ່າຍ, ຊົງກ່າວເປັນເຣື່ອງ, ແລະຊົງກ່າວຈາກສະພາບຊີວິດການເປັນຢູ່ຂອງຜູ້ຄົນ. ບົດຮຽນຂອງພຣະອົງລວມທັງປະສົບການທີ່ຜູ້ຄົນສາມາດເຂົ້າໃຈໄດ້. ພຣະອົງຊົງກ່າວກ່ຽວກັບການຊອກຫາແກະທີ່ເສັຽໄປກັບມາ, ການຊອກຫາເງິນທີ່ຕົກເຫັ່ຽ, ແລະການກັບຄືນມາຂອງລູກຊາຍທີ່ເສັຽໄປ (ເບິ່ງ ລູກາ ໑໕).

ພຣະຜູ້ຊ່ວຍໃຫ້ລອດມັກຈະອ້າງເຖິງຂໍ້ພຣະຄັມພີເມື່ອພຣະອົງສອນ. ຈົ່ງພະຍາຍາມຊ່ວຍໃຫ້ຜູ້ທີ່ທ່ານສອນໃຫ້ພາກັນໃຊ້ພຣະຄັມພີເລື້ອຍໆລະຫວ່າງບົດຮຽນ. ຈົ່ງຊ່ວຍເຂົາເຈົ້າໃຫ້ເຂົ້າໃຈວ່າ

ຜູ້ຄົນທີ່ຢູ່ໃນພຣະຄັມພີ ເປັນຄົນແທ້ຈິງຜູ້ເຄີຍໄດ້ປະເຊີນກັບບັນຫາແລະມີຄວາມຊື່ນຊົມໃນຄວາມພະຍາຍາມທີ່ຈະຮັບໃຊ້ພຣະເຈົ້າຂອງເຂົາເຈົ້າ. ໃຫ້ຖາມຄຳຖາມອັນທີ່ຄົນໃນຫ້ອງຂອງທ່ານຕ້ອງໄດ້ຊອກຫາຄຳຕອບໃນພຣະຄັມພີ. ຈົ່ງຊຸກຍູ້ເຂົາແຕ່ລະຄົນໃຫ້ສຶກສາທີ່ບ້ານ, ແລະໃຫ້ສະແດງວິທີທີ່ຄົນໃນຫ້ອງຂອງທ່ານຈະສາມາດສຶກສາໄດ້ຢ່າງໄດ້ຜົນ. ຈົ່ງສອນເຂົາເຈົ້າໃຫ້ຮູ້ຈັກໃຊ້ສິ່ງຊ່ວຍເຫລືອໃນພຣະຄັມພີ. ເມື່ອທ່ານຂໍໃຫ້ຄົນໃດຄົນນຶ່ງຊ່ວຍໃນບົດຮຽນ ຈົ່ງຫາສິ່ງທີ່ເຂົາເຈົ້າຕ້ອງໄດ້ຄົ້ນຫາໃນພຣະຄັມພີແລະຕາມຄຳເວົ້າຂອງສາສດາໃນຍຸກສຸດທ້າຍ.

## ສອນໂດຍພຣະວິນຍານ

ຄູສອນຄວນພະຍາຍາມທີ່ຈະມີພຣະວິນຍານຂອງພຣະເຈົ້າຢູ່ນຳເມື່ອເຂົາເຈົ້າສອນ. ຄົນນັ້ນອາດສອນເຖິງຄວາມຈິງໄດ້ດີທີ່ສຸດ ແລະນັກຮຽນກໍຕັ້ງໃຈຟັງໄດ້ດີທີ່ສຸດ, ແຕ່ຖ້າບໍ່ມີພຣະວິນຍານຢູ່ນຳ ຄຳສອນເຫລົ່ານັ້ນກໍຈະບໍ່ສາມາດຊຶມເຂົ້າໄປໃນຈິດໃຈຂອງຄົນໄດ້. ເມື່ອພຣະວິນຍານຢູ່ນຳ, ທຸກຄົນຈະໄດ້ຮັບຄວາມເຂັ້ມແຂງ ໃນຄວາມຮັກຂອງເຂົາເຈົ້າຕໍ່ພຣະບິດາເທິງສວັນແລະພຣະເຢຊູຄຣິສ, ໃນຄວາມຮັກຂອງເຂົາເຈົ້າຕໍ່ເຊິ່ງກັນແລະກັນ, ແລະໃນຄຳສັນຍາຂອງເຂົາເຈົ້າທີ່ຈະດຳລົງຊີວິດຕາມພຣະກິດຕິຄຸນ. ຂໍ້ຄວາມຕໍ່ໄປນີ້ເປັນບາງຢ່າງທີ່ທ່ານສາມາດເຮັດໄດ້ ເພື່ອຈະໄດ້ມີພຣະວິນຍານຢູ່ນຳການສິດສອນຂອງທ່ານ:

- ເລີ່ມຕົ້ນດ້ວຍການອະທິຖານ.
- ສອນຈາກພຣະຄັມພີແລະຈາກຄຳເວົ້າຂອງສາສດາໃນຍຸກສຸດທ້າຍ.
- ສະແດງປະຈັກພະຍານຂອງທ່ານ.
- ເລົ່າເຖິງປະສົບການຂອງທ່ານແລະເຊື້ອເຊີນໃຫ້ຄົນອື່ນເຮັດເຫມືອນກັນ.
- ໃຊ້ເພງ (ເບິ່ງ ໜ້າ ໑໙).
- ສະແດງຄວາມຮັກຂອງທ່ານທີ່ມີຕໍ່ພຣະເຈົ້າແລະຕໍ່ຄົນອື່ນ.

ຖ້າທ່ານໄດ້ຕຽມຕົວຢ່າງຮຽບຮ້ອຍແລ້ວ, ພຣະວິນຍານບໍຣິສຸດຈະໃຫ້ຄວາມຮູ້ແກ່ທ່ານແລະນຳພາທ່ານເມື່ອທ່ານສອນ. ທ່ານອາດຈະຮູ້ເຖິງຄວາມຮູ້ສຶກຂອງຄົນທີ່ທ່ານສອນແລະເຖິງສິ່ງທີ່ທ່ານຄວນເນັ້ນໜັກໃຫ້ຫລາຍຂຶ້ນໃນບົດຮຽນຂອງທ່ານ. ທ່ານອາດໄດ້ຮັບແນວຄິດແລະຄວາມຮູ້ສຶກກ່ຽວກັບວິທີທີ່ທ່ານຄວນສອນເຂົາເຈົ້າໃນທາງທີ່ໄດ້ຜົນ. ທ່ານຈະມີຄວາມພະຍາຍາມຫລາຍຂຶ້ນເມື່ອທ່ານຖ່ອມຕົນເຊື່ອຟັງການດົນໃຈຈາກພຣະວິນຍານ. ທ່ານຍັງຈະສາມາດຊ່ວຍຄົນທີ່ທ່ານສອນໃຫ້ຮູ້ສຶກເຖິງອິດທິພົນຂອງພຣະວິນຍານນຳອີກ.

# ຊອກຫາວິທີສອນຜູ້ຄົນໃຫ້ຮ່ຳຮຽນຢ່າງພາກພຽນ

ພຣະເຈົ້າຊົງສັ່ງໃຫ້ເຮົາສແວງຫາຄຳແຫ່ງປັນຍາໃນໜັງສືທີ່ດີທີ່ສຸດ; ສແວງຫາການຮຽນຮູ້ ແມ້ການສຶກສາ ແລະ ໂດຍສັດທາດ້ວຍ (see D&C 88:118). ສະມາຊິກແຕ່ລະຄົນມີຄວາມຮັບຜິດຊອບ ທີ່ຈະຮັບເອົາຄວາມຮູ້ເຖິງຄວາມຈິງຜ່ານຄວາມພະຍາຍາມຂອງຕົນ. ໜ້າທີ່ຮັບຜິດຊອບຂອງ ຄູສອນຄື ທີ່ຈະຊ່ວຍໃຫ້ຄົນອື່ນຢາກມີຄວາມ ປາຖນາທີ່ຈະຮຽນ, ທີ່ຈະເຂົ້າໃຈ, ແລະທີ່ຈະ ດຳລົງຊີວິດຕາມພຣະກິດຕິຄຸນ. ກ່ອນຈະເຮັດ ໃຫ້ໜ້າທີ່ນີ້ສຳເຣັດໄດ້ນັ້ນ, ທ່ານຕ້ອງໄດ້ເອົາໃຈ ໃສ່ກັບສາມຢ່າງດັ່ງຕໍ່ໄປນີ້:



໑. ໃຫ້ມີຄວາມສົນໃຈກັບຄົນທີ່ທ່ານສອນ. ວິທີນຶ່ງຄືຄວາມສົນອົກສົນໃຈຂອງທ່ານໃນ ການສຶກສາພຣະກິດຕິຄຸນ. ອີກຢ່າງນຶ່ງແມ່ນ ວິທີສອນຂອງທ່ານທີ່ຈະເຮັດໃຫ້ບົດຮຽນນັ້ນ ແຈ່ມແຈ້ງ, ເປັນທີ່ສົນໃຈ, ແລະງ່າຍທີ່ຈະ ຈື່ຈຳ (ເບິ່ງ ໜ້າ ໑໘-໑໙). ການເຮັດໃຫ້ຜູ້ຄົນມີຄວາມສົນໃຈໃນຕອນເລີ້ມຕົ້ນບົດຮຽນເປັນສິ່ງ ສຳຄັນຫລາຍ. ເມື່ອທ່ານຕຽມບົດຮຽນ, ຈົ່ງຫາຊ່ອງທາງທີ່ຈະ ເຊື້ອເຊີນພຣະວິນຍານ, ຫາວິທີໃຫ້ ທຸກຄົນມີຄວາມສົນໃຈຕອນເລີ້ມຕົ້ນບົດຮຽນ, ແລະເຈາະຈົງສອນແຕ່ຫລັກທັມພຣະກິດຕິຄຸນ ອັນທີ່ຈະເອົາມາສອນຫ້ອງຮຽນເທົ່ານັ້ນ.

໒. ຊຸກຍູ້ໃຫ້ຜູ້ຄົນມີສ່ວນຮ່ວມ. ວາງແຜນທີ່ຈະໃຫ້ທຸກຄົນມີສ່ວນຮ່ວມໃນບົດຮຽນຂອງທ່ານ. ທ່ານຄວນຂໍໃຫ້ຄົນໃດຄົນນຶ່ງອ່ານຂໍ້ຄວາມທີ່ທ່ານຂຽນໄວ້ຫລືອ່ານຂໍ້ພຣະຄັມພີຫລືເລົ່າເຣື່ອງ. ທ່ານຄວນຂໍໃຫ້ຜູ້ຄົນຕອບຄຳຖາມແລະສົນທະນາເຣື່ອງບົດຮຽນໄດ້ຢ່າງສະບາຍ. ທ່ານຄວນ ຂໍໃຫ້ບາງຄົນສະແດງປະຈັກພະຍານຫລືເລົ່າປະສົບການສ່ວນຕົວທີ່ກ່ຽວເນື່ອງກັບບົດຮຽນ. ບາງຄັ້ງມັນຈະສຳຄັນຫລາຍທີ່ທ່ານຈະຕ້ອງໄດ້ແບ່ງໜ້າທີ່ເຫລົ່ານີ້ໃຫ້ຜູ້ຄົນລ່ວງໜ້າ ເພື່ອວ່າເຂົາເຈົ້າຈະໄດ້ຝຶກຫັດໄວ້ລ່ວງໜ້າ ແລະຮູ້ສຶກສະບາຍໃຈທີ່ຈະກະທຳໃນຫ້ອງຮຽນ.

ຫົວຂໍ້ຂອງບົດຮຽນຂອງຄູສອນຄົນນຶ່ງແມ່ນກ່ຽວກັບຄວາມສຳຄັນຂອງການອ່ານພຣະຄັມພີ ມໍມອນ. ລາວໄດ້ຂໍໃຫ້ນັກຮຽນຄົນໜຸ່ມໃນຫ້ອງຂອງລາວຄິດຫາຄຳໃນພຣະຄັມພີຂໍ້ທີ່ໄດ້ ປ່ຽນແປງຊີວິດຂອງເຂົາເຈົ້າ. ແລ້ວລາວໄດ້ຂໍໃຫ້ສອງສາມຄົນຂຶ້ນມາອ່ານຂໍ້ພຣະຄັມພີຂອງເຂົາເຈົ້າ ແລະບອກວ່າ ພຣະຄັມພີຂໍ້ນັ້ນໄດ້ປ່ຽນແປງຊີວິດຂອງເຂົາເຈົ້າແນວໃດ. ເມື່ອແຕ່ລະຄົນໄດ້ອອກມາ ສະແດງປະຈັກພະຍານຂອງຕົນເຖິງອຳນາດຂອງພຣະຄັມພີມໍມອນ, ຄົນອື່ນໆໃນຫ້ອງກໍມີຄວາມ ຮູ້ສຶກທີ່ຢາກຈະອ່ານແລະໃຕ່ຕອງພຣະຄັມພີຫລາຍຂຶ້ນທຸກວັນ.

ບາງຄົນກໍບໍ່ຢາກມີສ່ວນຮ່ວມເພາະຄວາມອາຍ. ທ່ານບໍ່ຄວນຂໍໃຫ້ຄົນນັ້ນອ່ານຫລືອະທິຖານໃນຫ້ອງຈົນກວ່າທ່ານຈະແນ່ໃຈວ່າເຂົາເຕັມໃຈທີ່ຈະເຮັດ. ຖ້າທ່ານມີຄວາມສົງໃສກ່ຽວກັບຄວາມເຕັມໃຈທີ່ຈະມີສ່ວນຮ່ວມຂອງຜູ້ຄົນ, ໃຫ້ທ່ານຂໍໃຫ້ຄົນອາສາສມັກແທນທີ່ຈະເອີ້ນຊື່ຄົນໃດຄົນນຶ່ງທີ່ບໍ່ເຕັມໃຈໃຫ້ຕອບຄຳຖາມຂອງທ່ານ. ຄົນຢູ່ໃນຫ້ອງຈະຄ່ອຍໆຮູ້ສຶກສະບາຍໃຈຂຶ້ນໃນການມີສ່ວນຮ່ວມ ຖ້າເຂົາເຈົ້າເຫັນວ່າຜູ້ມີສ່ວນຮ່ວມໄດ້ຮັບການນັບຖືແລະການເຫັນອົກເຫັນໃຈຈາກທ່ານ.

໕. ຈົ່ງຊ່ວຍເຂົາເຈົ້າໃຫ້ນຳສິ່ງທີ່ເຂົາເຈົ້າຮຽນໄປໃຊ້. ທ່ານກໍຄວນຊ່ວຍຄົນໃນຫ້ອງໃຫ້ນຳເອົາສິ່ງທີ່ເຂົາເຈົ້າໄດ້ຮຽນໄປນຳໃຊ້ກັບສິ່ງທີ່ເກີດຂຶ້ນໃນຊີວິດຂອງເຂົາເຈົ້ານຳອີກ. ການນີ້ລວມທັງການຂໍໃຫ້ຄົນໃນຫ້ອງຮຽນເຮັດຢ່າງໃດຢ່າງນຶ່ງ ອັນທີ່ຈະຊ່ວຍເຂົາເຈົ້າໄດ້ມີປະສົບການກັບຄວາມຈິງຕາມບົດຮຽນທີ່ໄດ້ຮຽນມາ.

## ການສ້າງບັນຍາກາດໃນຫ້ອງຮຽນ

ບັນຍາກາດທີ່ດີທີ່ສຸດສຳລັບການຮຽນພຣະກິດຕິຄຸນແມ່ນຄວາມເຫັນອົກເຫັນໃຈຂອງແຕ່ລະຄົນສຳລັບການຮຽນຂອງຄົນອື່ນໆໃນຫ້ອງ. ຜູ້ຄົນຈະມີຄວາມປາຖະໜາທີ່ຈະຮຽນເພີ່ມຂຶ້ນເມື່ອຄູສອນ ແລະຜູ້ຮຽນຮັກເຊິ່ງກັນແລະກັນແລະຊ່ວຍກັນໃຫ້ເຂົ້າໃຈແລະດຳລົງຊີວິດຕາມພຣະກິດຕິຄຸນ. ເມື່ອທ່ານແລະຜູ້ທີ່ທ່ານສອນພ້ອມພຽງຮຽງໜ້າກັນສ້າງບັນຍາກາດໃນຫ້ອງໃຫ້ດີຂຶ້ນ ແລ້ວການລົບກວນຈະມີໜ້ອຍລົງ. ທ່ານຄວນພະຍາຍາມຈົນສຸດຄວາມສາມາດທີ່ຈະສ້າງໃຫ້ມີບັນຍາກາດເຊັ່ນນີ້ ແລະຊ່ວຍຜູ້ທີ່ທ່ານສອນໃຫ້ຮູ້ເຖິງວິທີທີ່ຈະຊ່ວຍທ່ານໃຫ້ກະທຳໄດ້ສຳເຣັດຜົນ.




ຕໍ່ໄປນີ້ເປັນບາງຢ່າງທີ່ທ່ານສາມາດນຳໃຊ້ໄດ້ໃນການສ້າງບັນຍາກາດໃນຫ້ອງຮຽນໃຫ້ດີຂຶ້ນ:

- ໄປເຖິງຫ້ອງຮຽນທັນເວລາແລະມີເຄື່ອງໃຊ້ສອນຄົບຖ້ວນ.
- ເບິ່ງວ່າຫ້ອງຮຽນສະອາດດີ, ເປັນລະບຽບຮຽບຮ້ອຍ, ນັ່ງໄດ້ສະບາຍ, ແລະບໍ່ມີສິ່ງລົບກວນຖ້າເປັນໄປໄດ້.
- ເລີ້ມແລະຈົບບົດຮຽນຕາມເວລາ.
- ທັກທາຍແລະກ່າວຕ້ອນຮັບແຕ່ລະຄົນ, ຖ້າເປັນໄປໄດ້.

- ເຮັດໃນສິ່ງທີ່ຈະມີພຣະວິນຍານ, ມີຄວາມຄາຣະວະ, ແລະມີຄວາມເຫັນອົກເຫັນໃຈກັນ.
- ຮັກຄົນໃນຫ້ອງແລະຊ່ວຍເຂົາເຈົ້າໃຫ້ຮູ້ສຶກສະບາຍໃຈໃນການມີສ່ວນຮ່ວມ.
- ຖາມຄຳຖາມທີ່ຈະຊ່ວຍຄົນໃນຫ້ອງເຈາະຈົງຢູ່ໃນບົດຮຽນ.
- ຊຸກຍູ້ຄົນໃນຫ້ອງໃຫ້ຟັງຄົນອື່ນເວົ້າດ້ວຍຄວາມນັບຖືແລະດ້ວຍຄວາມເຂົ້າໃຈ.
- ຫັກຫ້າມການເວົ້າສົນທະນາກັນໃນເຣື່ອງທີ່ຈະທຳຮ້າຍແລະເຮັດໃຫ້ປະຈັກພະຍານຂອງຄົນອື່ນເຊື່ອມເສັຽ ຫລືເຮັດໃຫ້ພຣະວິນຍານຫນີໄປ.

ເຖິງແມ່ນວ່າທ່ານໄດ້ພະຍາຍາມຈົນສຸດຄວາມສາມາດໃນການສ້າງບັນຍາກາດໃນຫ້ອງຮຽນໃຫ້ດີຂຶ້ນ, ແຕ່ບາງຄັ້ງທ່ານຈະພົບວ່າທ່ານມີບັນຫາຢູ່. ຄຳຖາມດັ່ງຕໍ່ໄປນີ້ສາມາດຊ່ວຍທ່ານແກ້ໄຂບັນຫາທີ່ມັກຈະເກີດຂຶ້ນໄດ້:

- ຖ້າມີການລົບກວນເກີດຂຶ້ນ, ໃຫ້ທ່ານຢຸດເວົ້າຈົນວ່າຫ້ອງຮຽນມີດງຽບລົງ ກ່ອນຈະສອນບົດຮຽນຕໍ່ໄປ.
- ຖ້າມີຄົນລົມກັນໃນລະຫວ່າງການສອນ, ໃຫ້ທ່ານເວົ້າລົມກັບເຂົາເຈົ້າເປັນສ່ວນຕົວຫລັງຈາກຫ້ອງຮຽນ ແລະຂໍຮ້ອງໃຫ້ເຂົາເຈົ້າຊ່ວຍທ່ານເຮັດໃຫ້ຫ້ອງຮຽນດີຂຶ້ນ.
- ຖ້າມີຄົນໃດຄົນນຶ່ງຕອບຄຳຖາມຄົນດຽວ, ໃຫ້ທ່ານເອີ້ນຖາມຄົນອື່ນ ຫລືບອກຄົນນັ້ນດ້ວຍຄວາມສຸພາບວ່າ ທ່ານຢາກໄດ້ຍິນຈາກຄົນອື່ນຜູ້ຍັງບໍ່ໄດ້ຕອບເທື່ອ.
- ຖ້າຄົນໃນຫ້ອງເວົ້າເຣື່ອງອື່ນທີ່ບໍ່ມີສ່ວນກ່ຽວຂ້ອງກັບບົດຮຽນ, ໃຫ້ບອກໃຫ້ເຂົາເຈົ້າຮູ້ ແລະໃຫ້ເຂົາເຈົ້າຫັນມາເວົ້າເຣື່ອງທີ່ກ່ຽວຂ້ອງກັບບົດຮຽນ.

ການລົບກວນໃນຫ້ອງຮຽນຈະມີຫນ້ອຍລົງຖ້າທ່ານຫາຊ່ອງທາງໃຫ້ທຸກຄົນໃນຫ້ອງຮຽນມີຄວາມຮູ້ສຶກວ່າ ເຂົາເຈົ້າເປັນທີ່ຮັກຫອມແລະໄດ້ຮັບການຮັບຕ້ອນແລະມີສ່ວນຮ່ວມໄດ້.

# ການໃຊ້ວິທີສອນໃນຫລາຍແບບ



ມັນມີຫລາຍສິ່ງທີ່ທ່ານສາມາດເຮັດໄດ້ ທີ່ຈະເຮັດໃຫ້ບົດຮຽນຂອງທ່ານເປັນໜ້າສົນໃຈ ແລະທີ່ຈະຊ່ວຍຄົນໃນຫ້ອງໃຫ້ຮຽນຮູ້ເຖິງຄວາມຈິງຂອງພຣະກິດຕິຄຸນ. ຕໍ່ໄປນີ້ແມ່ນຂໍ້ແນະນຳບາງຢ່າງ:

## ໃຊ້ເຣື່ອງເລົ່າແລະຕົວຢ່າງ

ເຣື່ອງເລົ່າແລະຕົວຢ່າງຈະເປັນສິ່ງທັນຜູ້ຄົນມາສົນໃຈກັບບົດຮຽນແລະສະແດງວິທີທີ່ຈະເອົາ ຫລັກທັມພຣະກິດຕິຄຸນໄປນຳໃຊ້ໃນຊີວິດປະຈຳວັນ.

ທ່ານສາມາດຊອກຫາເຣື່ອງເລົ່າທີ່ດີຫລາຍເຣື່ອງໄດ້ຈາກພຣະຄັມພີແລະຈາກປຶ້ມບົດຮຽນຂອງທ່ານ. ກ່ອນທ່ານຈະສອນ, ໃຫ້ທ່ານອ່ານເຣື່ອງທີ່ທ່ານຈະເອົາໄປສອນເສັຽກ່ອນ. ໃຫ້ຝຶກການເລົ່າເຣື່ອງໂດຍໃຊ້ຄຳຂອງທ່ານເອງ. ຄົນໃນຫ້ອງຈະສົນໃຈເຣື່ອງເລົ່າທີ່ທ່ານເລົ່າດ້ວຍຄຳຂອງທ່ານເອງຫລາຍກວ່າທ່ານຈະອ່ານມັນໃຫ້ເຂົາເຈົ້າຟັງ. ພ້ອມນີ້ນັກຮຽນຜູ້ນ້ອຍຈະມັກເຣື່ອງເລົ່າຫລາຍເມື່ອມີຄົນສະແດງໃຫ້ເບິ່ງ.

ຄູສອນຊັ້ນປະຖົມວັຍຄົນນຶ່ງມັກຈະເລີ້ມບົດຮຽນຂອງລາວດ້ວຍເຣື່ອງເລົ່າຈາກພຣະຄັມພີ. ຕົວຢ່າງເຊັ່ນ, ເມື່ອຫ້ອງຮຽນຂອງລາວຈະຮຽນກ່ຽວກັບຄວາມເມດຕາ, ແລ້ວລາວຈະເລົ່າເຣື່ອງໄທຊາມາເຣັຽທີ່ໃຈດີໃຫ້ເຂົາເຈົ້າຟັງ. ເດັກນ້ອຍສາມາດວາດພາບນັ້ນຢູ່ໃນໃຈເຫັນຊາຍຄົນທີ່ຖືກປຸ້ນ ແລະເຫັນພວກຜູ້ຊາຍທີ່ເດີນຫລີກໜີໄປ. ເຂົາເຈົ້າມີຄວາມປະທັບໃຈຫລາຍກັບການມີຄວາມເມດຕາ

ແລະສັກສີຂອງໄທຊາມາເຣັຽ ຜູ້ພັນບາດແຜໃຫ້ຊາຍບາດເຈັບຄົນນັ້ນ. ເດັກນ້ອຍຈະມັກຟັງເຣື່ອງເລົ່າແບບນີ້. ຄູສອນໄດ້ຮຽນວິທີໃຊ້ສຽງປາກເວົ້າເພື່ອເດັກຈະມີຄວາມສົນໃຈກັບບົດຮຽນ. ນັກຮຽນໃນຫ້ອງຈະຮູ້ຈັກເຣື່ອງໃນພຣະຄັມພີແລະມີຄວາມສົນໃຈກັບມັນຫລາຍຂຶ້ນ.

## ໃຊ້ຮູບພາບແລະສິ່ງຂອງ

ພຣະຜູ້ຊ່ວຍໃຫ້ລອດມັກຈະໃຊ້ສິ່ງຂອງທີ່ເຂົ້າໃຈງ່າຍເວລາພຣະອົງສອນ. ພຣະອົງຊົງໃຊ້ເຂົ້າຫວີດ, ດິນຊາຍ, ກ້ອນຫີນ, ແລະສິ່ງອື່ນໆເຫມືອນກັນນີ້ ເພື່ອຊ່ວຍຜູ້ຄົນໃຫ້ເຂົ້າໃຈສິ່ງທີ່ພຣະອົງຊົງສອນ. ຕົວຢ່າງເຊັ່ນ, ພຣະອົງໄດ້ປຽບປະມາອານາຈັກຂອງພຣະຜູ້ເປັນເຈົ້າໃສ່ກັບຊັບທີ່ປະເສີດເລີດລ້ຳທີ່ສຸດ ຈົນຜູ້ຄົນຍອມທີ່ຈະຂາຍທຸກສິ່ງທີ່ຕົນມີເພື່ອຈະໄດ້ມັນມາເປັນຂອງຕົນ (ເບິ່ງ ມັດທາຍ ໑໓:໔໔).



ໃຫ້ເບິ່ງຮອບໆຕົວທ່ານ. ໃຫ້ເບິ່ງວ່າມີສິ່ງຂອງອັນໃດແດ່ທີ່ທ່ານສາມາດໃຊ້ໄດ້ ເພື່ອຊ່ວຍຄົນໃນຫ້ອງທ່ານໃຫ້ເຂົ້າໃຈຫລັກທັມພຣະກິດຕິຄຸນຫລາຍຂຶ້ນ?

ທ່ານຄວນໃຊ້ການແຕ້ມແລະຮູບພາບທີ່ເບິ່ງເຂົ້າໃຈໄດ້ງ່າຍເປັນສ່ວນນຶ່ງຂອງບົດຮຽນ. ໃຫ້ສະແດງຮູບຈາກຊຸດຮູບພຣະກິດຕິຄຸນ ເມື່ອທ່ານເລົ່າເຣື່ອງຈາກພຣະຄັມພີ. ໃຫ້ແຕ້ມຮູບງ່າຍໆໃສ່ເທິງກະດານ ຫລືໃສ່ໃນເຈັ້ຽ ເພື່ອໃຫ້ບົດຮຽນນັ້ນເປັນຫນ້າສົນໃຈຫລາຍຂຶ້ນ.

ຄູສອນຄົນນຶ່ງໄດ້ຍົກຄຳອຸປມາຂອງພຣະເຢຊູເຣື່ອງເຂົ້ານົກປົນເຂົ້າດີມາສອນເປັນບົດຮຽນ. ສະມາຊິກໃນຫ້ອງຮຽນຂອງລາວເປັນຊາວໄຮ່ຊາວນາ, ສະນັ້ນຄູສອນຈຶ່ງຮູ້ວ່າເຂົາເຈົ້າຈະຕ້ອງເຂົ້າໃຈວ່າຖ້າເຮົາຫາກຫລົກຕົ້ນເຂົ້ານົກອອກຕອນມັນຍັງບໍ່ເປັນຮວງເທື່ອເຮົາອາດຈະຫລົງໄປຫລົກເອົາຕົ້ນເຂົ້າດີອອກນຳ. ລາວໄດ້ເອົາມັດເຂົ້າຫວີດປົນກັບຫຍ້າມາຫ້ອງຮຽນນຳ. ລາວໄດ້ສະແດງມັນໃຫ້ຄົນເຫັນຕລອດການສອນບົດຮຽນຂອງລາວ.

ຄູສອນອີກຄົນນຶ່ງໄດ້ຊຸກຍູ້ຄົນໃນຫ້ອງຂອງລາວ ໃຫ້ຄິດຫາບາງຢ່າງທີ່ປຽບໃສ່ກັບການກັບໃຈ. ນັກຮຽນຄົນນຶ່ງບອກວ່າ ການກັບໃຈເຫມືອນດັ່ງກ້ອນສະບູ, ໂດຍການໃຊ້ມັນ, ມັນຈະຊຳຣະລ້າງເຮົາຈາກບາບຂອງເຮົາ.

## ໃຊ້ເພງ

ເພງເປັນທາງນຶ່ງທີ່ດີທີ່ສຸດທີ່ຈະເຊື້ອເຊີນພຣະວິນຍານຂອງພຣະເຈົ້າມາສະຖິດຢູ່ໃນຫ້ອງຮຽນຂອງທ່ານໄດ້. ເພງຈະຊ່ວຍເຮົາອະທິບາຍເຖິງຄວາມຮູ້ສຶກຂອງເຮົາ ຊຶ່ງເຮົາອາດບໍ່ສາມາດກ່າວອອກມາໄດ້.



ເພງສວດຂອງສາສນາຈັກສາມາດສອນຫລັກທັມພຣະກິດຕິຄຸນຫລາຍຢ່າງໄດ້ແລະສາມາດລວມຢູ່ໃນບົດຮຽນເກືອບທຸກບົດໄດ້. ທ່ານສາມາດເຊື້ອເຊີນບາງຄົນ, ບາງກຸ່ມ, ຫລືຫມົດທັງຄອບຄົວ ຫລືທັງຫ້ອງຮຽນໃຫ້ມາຮ້ອງເພງທີ່ກ່ຽວຂ້ອງກັບບົດຮຽນຂອງທ່ານໄດ້. ແລະທ່ານກໍສາມາດອ່ານເນື້ອເພງສວດຕາມຄົນຕີປະກອບໃຫ້ຄົນໃນຫ້ອງຮຽນຟັງໄດ້ເຫມືອນກັນ. ຫລືທ່ານຈະເປີດເທັບເພງສວດໃຫ້ເຂົາເຈົ້າຟັງກໍໄດ້.

ຄູສອນຄົນນຶ່ງໄດ້ຕຽມບົດຮຽນກ່ຽວກັບການຮັບໃຊ້. ລາວໄດ້ເລືອກເພງສວດເພງນຶ່ງທີ່ເຫມາະກັບຫົວຂໍ້. ໃນລະຫວ່າງການສອນບົດຮຽນນັ້ນ, ລາວໄດ້ຂໍໃຫ້ຊິສເຕີຄົນນຶ່ງອ່ານເນື້ອເພງສວດ ແລະອີກຄົນນຶ່ງຮ້ອງຄ່ອຍໆຢູ່ໃນຮູຄໍ. ລາວໄດ້ຂໍໃຫ້ຄົນໃນຫ້ອງຮຽນໄຕ່ຕອງຄວາມຫມາຍຂອງເພງນັ້ນຢູ່ໃນໃຈ. ເພງນັ້ນໄດ້ຊ່ວຍຄົນໃນຫ້ອງຮຽນໃຫ້ມີຄວາມຫນັກແຫນ້ນຫລາຍຂຶ້ນກ່ຽວກັບຄວາມສຳຄັນຂອງການຮັບໃຊ້.

## ຖາມຄຳຖາມທີ່ຈະໃຫ້ນັກຮຽນໃນຫ້ອງຕ້ອງໄດ້ຄິດຢ່າງຖ້ວນຖີ່ແລະສ້າງການສົນທະນາ

ການຖາມຄຳຖາມທີ່ຖືກຕ້ອງຈະຊຸກຍູ້ໃຫ້ຜູ້ຄົນຕ້ອງໄດ້ຄິດຢ່າງຖ້ວນຖີ່ແລະມີການສົນທະນາກັນເຣື່ອງບົດຮຽນຂອງທ່ານ. ຄຳຖາມແລະການສົນທະນາກັນຈະຊ່ວຍທ່ານໄດ້ໃນຫລາຍວິທີທາງ. ມັນຈະຊ່ວຍຄົນໃນຫ້ອງຮຽນຕັ້ງໃຈຮຽນ. ທ່ານສາມາດສອບຖາມໄດ້ຖ້າຫາກວ່າຄົນໃນຫ້ອງຮຽນເຂົ້າໃຈບົດຮຽນຫລືບໍ່. ຄົນໃນຫ້ອງຮຽນສາມາດສອນເຊິ່ງກັນແລະກັນໄດ້ເມື່ອເຂົາເຈົ້າຕອບຄຳຖາມ ແລະສົນທະນາກັນກ່ຽວກັບຄຳຖາມນັ້ນ. ເຂົາເຈົ້າສາມາດຮຽນວິທີທີ່ຈະນຳໃຊ້ຫລັກທັມພຣະກິດຕິຄຸນໃນຊີວິດຂອງເຂົາເຈົ້າເອງ.



ໃນຂະນະທີ່ທ່ານຕຽມບົດຮຽນຂອງທ່ານ, ຈົ່ງຕັດສິນວ່າຄຳຖາມອັນໃດທີ່ສົມຄວນຈະເອົາໄປຖາມ. ຄຳຖາມຕົວຢ່າງຕໍ່ໄປນີ້ກໍສາມາດຊ່ວຍທ່ານໄດ້.

- ໃຫ້ຖາມຄຳຖາມທີ່ຈະຊ່ວຍຄົນໃນຫ້ອງຮຽນໃຫ້ຄິດກ່ຽວກັບຫລັກທັມພຣະກິດຕິຄຸນແລະກ່ຽວກັບວິທີທີ່ຈະເອົາມັນໄປນຳໃຊ້ໃນຊີວິດຂອງເຂົາເຈົ້າ. ຄຳຖາມທີ່ກະຕຸ້ນໃຫ້ຄົນຕອບມັກຈະເລີ້ມດ້ວຍຄຳວ່າ "ເປັນຫຍັງ?" ຫລື "ເປັນດ້ວຍວິທີໃດ?" ທ່ານຄວນພະຍາຍາມຫລີກລ້ຽງຈາກຄຳຖາມທີ່ຄົນສາມາດຕອບໄດ້ພຽງວ່າ "ແມ່ນ" ຫລື "ບໍ່ແມ່ນ" ຫລືຄຳຖາມອື່ນໆທີ່ໃຫ້ຄຳຕອບໄດ້ພຽງແຕ່ຄຳດຽວ.

  ຕົວຢ່າງເຊັ່ນ ໃນການສອນບົດຮຽນກ່ຽວກັບການໃຫ້ພຣະຜູ້ຊ່ວຍໃຫ້ລອດເປັນຈຸດໃຈກາງໃນຊີວິດຂອງເຮົາ, ທ່ານຄວນຖາມຄຳຖາມທີ່ເຫມືອນດັ່ງຕໍ່ໄປນີ້:

  "ຄຳວ່າ ການສ້າງຢູ່ເທິງສີລາຂອງພຣະຄຣິສຫມາຍຄວາມວ່າແນວໃດ?"

  "ມີພື້ນຖານໃດແດ່ທີ່ນອກເຫນືອໄປຈາກສີລາຂອງພຣະຄຣິສທີ່ບາງຄັ້ງຜູ້ຄົນຈະສ້າງຊີວິດຂອງເຂົາໃສ່?"

  "ພວກທ່ານໄດ້ຮັບພອນແນວໃດແດ່ເມື່ອພວກທ່ານໄດ້ສ້າງຊີວິດໄວ້ເທິງສີລາຂອງພຣະຄຣິສ?"

- ຖາມຄຳຖາມທີ່ຈະຊຸກຍູ້ໃຫ້ຄົນໃນຫ້ອງຮຽນແບ່ງປັນແນວຄິດແລະປະສົບການສ່ວນຕົວຂອງເຂົາເຈົ້າ. ຕົວຢ່າງເຊັ່ນ:

  "ເປັນຫຍັງພຣະເຈົ້າຈຶ່ງບັນຊາໃຫ້ພວກເຮົາອະທິຖານເລື້ອຍໆ?"

  "ພຣະອົງຕອບຄຳອະທິຖານຂອງພວກເຮົາໃນທາງໃດແດ່?"

- ຖາມຄຳຖາມທີ່ຈະຊ່ວຍຄົນໃນຫ້ອງຮຽນໃຫ້ເອົາຫລັກທັມພຣະກິດຕິຄຸນໄປນຳໃຊ້ໃນຊີວິດຂອງເຂົາເຈົ້າ. ຕົວຢ່າງເຊັ່ນ:

  "ເຮົາຈະສາມາດຕຽມຕົວເອງໃຫ້ພ້ອມເພື່ອຮັບເອົາຄຳຕອບຕໍ່ຄຳອະທິຖານຂອງເຮົາໄດ້ແນວໃດ?"

  "ພວກທ່ານຮູ້ຈັກວ່າພຣະເຢຊູຄຣິສຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງໂລກໄດ້ແນວໃດ?"

  "ພວກທ່ານຈະມີປະຈັກພະຍານເຂັ້ມແຂງພຽງພໍວ່າໂຢເຊັບ ສມິທ ເປັນສາສດາຂອງພຣະຜູ້ເປັນເຈົ້າໄດ້ແນວໃດ?"

ຖ້າມີຄົນໃດຄົນນຶ່ງຖາມໃນສິ່ງທີ່ທ່ານບໍ່ສາມາດຕອບ, ໃຫ້ທ່ານຂໍໃຫ້ຄົນໃນຫ້ອງຮຽນຊ່ວຍຕອບໃຫ້ທ່ານ, ຫລືບອກຄົນນັ້ນວ່າ ທ່ານຈະຊອກຫາຄຳຕອບແລະຈະບອກໃຫ້ລາວຮູ້ເທື່ອຫນ້າ.

ຢ່າເປັນຫ່ວງຖ້າຫາກວ່າຜູ້ຄົນມິດງຽບຢູ່ຈັກບຶດນຶ່ງຫລັງຈາກທ່ານຖາມຄຳຖາມ. ຕາມປົກກະຕິແລ້ວ ເຂົາເຈົ້າຈະຕ້ອງໃຊ້ເວລາຈັກໜ້ອຍນຶ່ງເພື່ອຄິດຫາຄຳຕອບ. ແຕ່ຖ້າເບິ່ງຄືວ່າເຂົາເຈົ້າບໍ່ເຂົ້າໃຈຄຳຖາມ, ທ່ານຄວນຖາມໃນທາງໃຫມ່. ເມື່ອທ່ານຈະຖາມຄົນໃດຄົນນຶ່ງ, ທ່ານຄວນເອີ້ນຊື່ເຂົາເຈົ້າກ່ອນ ແລ້ວໃຫ້ຖາມຄຳຖາມນັ້ນ.

ສຸດທ້າຍ, ຢ່າປຸດການສົນທະນາເລື່ອງທີ່ຄົນໃນຫ້ອງຮຽນສົນໃຈໄວເກີນໄປ ເພື່ອຈະໄດ້ສອນສິ່ງທີ່ທ່ານຕຽມມາໃຫ້ແລ້ວຫມົດທຸກຢ່າງ. ສິ່ງສຳຄັນທີ່ສຸດແມ່ນວ່າ ໃຫ້ສະມາຊິກຮູ້ສຶກເຖິງອິດທິພົນຂອງພຣະວິນຍານ, ໃຫ້ເຂົາເຈົ້າມີຄວາມເຂົ້າໃຈພຣະກິດຕິຄຸນຫລາຍຂຶ້ນ, ໃຫ້ເຂົາເຈົ້າຮຽນວິທີທີ່ຈະເອົາຫລັກທັມພຣະກິດຕິຄຸນໄປນຳໃຊ້ໃນຊີວິດຂອງເຂົາເຈົ້າ, ແລະໃຫ້ເຂົາເຈົ້າມີໃຈຫນັກແຫນ້ນຫລາຍຂຶ້ນທີ່ຈະດຳລົງຊີວິດຕາມພຣະກິດຕິຄຸນ.

## ເຊື້ອເຊີນແຂກພິເສດໃຫ້ມາຢ້ຽມຢາມ

ບາງຄັ້ງທ່ານຄວນເຊື້ອເຊີນແຂກພິເສດໃຫ້ມາທີ່ຫ້ອງຮຽນທ່ານ. ທ່ານສາມາດຂໍໃຫ້ສະມາຊິກທີ່ມີຄ່າຄວນຂອງສາສນາຈັກມາລາຍງານເລື່ອງໃດເລື່ອງນຶ່ງ, ມາເລົ່າເລື່ອງ, ຫລືມາກ່າວປະຈັກພະຍານ. ໃຫ້ບອກຄົນນັ້ນຮູ້ໄວ້ລ່ວງຫນ້າວ່າ ເຂົາມີເວລາຫລາຍປານໃດໃນຫ້ອງຮຽນຂອງທ່ານ. ໃຫ້ຂໍອະນຸຍາດຈາກອະທິການຫລືປະທານສາຂາຂອງທ່ານ ກ່ອນຈະເຊື້ອເຊີນຄົນໃດຄົນນຶ່ງຜູ້ບໍ່ໄດ້ຢູ່ໃນຫວອດຫລືສາຂາຂອງທ່ານມາຢ້ຽມຢາມ.

ປະທານໂຄຣັມຄົນນຶ່ງຂອງກຸ່ມແອລເດີໄດ້ເຊື້ອເຊີນສະມາຊິກຄົນນຶ່ງມາສອນກຸ່ມແອລເດີໃຫ້ຮູ້ວິທີທີ່ຈະເຮັດໃຫ້ບົດຮຽນຂອງເຂົາເຈົ້າເປັນຫນ້າຕື່ນເຕັ້ນຕໍ່ເດັກນ້ອຍຂອງຄອບຄົວທີ່ເຂົາເຈົ້າໄປຢ້ຽມຢາມ. ກຸ່ມແອລເດີບໍ່ພຽງແຕ່ໄດ້ເຂົ້າໃຈວ່າ ພວກເດັກນ້ອຍຈຳເປັນຕ້ອງມີສ່ວນຮ່ວມໃນການໄປຢ້ຽມຢາມຂອງເຂົາເຈົ້າເທົ່ານັ້ນ ແຕ່ເຂົາເຈົ້າຍັງໄດ້ຮັບຄຳແນະນຳຫລາຍຢ່າງຕື່ມອີກເຖິງວິທີທີ່ຈະເຮັດໃຫ້ເດັກສົນໃຈຢາກມີສ່ວນຮ່ວມນຳ.

## ໃຊ້ກິຈກັມ

ກິຈກັມທີ່ງ່າຍໆທີ່ກ່ຽວເນື່ອງກັບບົດຮຽນສາມາດຊ່ວຍຄົນໃນຫ້ອງຮຽນໄດ້ ໂດຍສະເພາະເດັກນ້ອຍແລະຊາວຫນຸ່ມ ເພື່ອຮຽນຫລັກທັມພຣະກິດຕິຄຸນ. ກິຈກັມຕ່າງໆທີ່ທ່ານຈັດໄວ້ຄວນໃຫ້ເຫມາະສົມກັບການຮ່ຳຮຽນພຣະກິດຕິຄຸນ. ຢູ່ໃນປຶ້ມບົດຮຽນຕ່າງໆທີ່ທາງສາສນາຈັກຈັດຂຶ້ນ ກໍມີຂໍ້ແນະນຳຫລາຍຢ່າງສຳລັບກິຈກັມຕ່າງໆ.

# ການຕຽມບົດຮຽນຂອງທ່ານ



ມັນເປັນສິ່ງສຳຄັນຫລາຍທີ່ທ່ານຈະຕຽມບົດຮຽນທີ່ທ່ານຈະສອນຢ່າງຖ້ວນຖີ່ ເພື່ອວ່າທ່ານຈະສາມາດສອນຫລັກທັມພຣະກິດຕິຄຸນຢ່າງໄດ້ຜົນ. ຂໍ້ຄວາມດັ່ງຕໍ່ໄປນີ້ຈະຊ່ວຍທ່ານຕຽມໄດ້.

## ຊອກຫາຫນັງສືຊ່ວຍເຫລືອ

ສາສນາຈັກໄດ້ຈັດພິມປຶ້ມບົດຮຽນຂຶ້ນອີງຕາມພຣະຄັມພີແລະຄຳສອນຂອງສາສດາໃນຍຸກສຸດທ້າຍ. ໃຫ້ຖາມຜູ້ນຳຖານະປະໂຣຫິດຫລືຜູ້ນຳອົງການຂອງທ່ານວ່າຫນັງສືເຫລົ່ານີ້ມີໃຫ້ໃຊ້ຫລືບໍ່:

- ຫນັງສືສຳລັບຄູສອນທີ່ຈັດພິມໂດຍສາສນາຈັກສຳລັບຫ້ອງຮຽນຂອງທ່ານ
- ພຣະຄັມພີສຳລັບຄົນໃນຫ້ອງຮຽນຂອງທ່ານ
- ວາຣະສານຂອງສາສນາຈັກທີ່ບັນຈຸຄຳສອນຂອງສາສດາໃນຍຸກສຸດທ້າຍ
- ສິ່ງຊ່ວຍເຫລືອການສຶກສາພຣະຄັມພີທີ່ເປັນພາສາຂອງທ່ານ
- ຊຸດຮູບທີ່ເອີ້ນວ່າ ຊຸດຮູບພຣະກິດຕິຄຸນ ຊຶ່ງມີຢູ່ໃນຫ້ອງສະມຸດປະຈຳໂບດຂອງທ່ານ.



ໃຫ້ເບິ່ງປື້ມທີ່ທ່ານມີເພື່ອໃຊ້ສອນ ເພື່ອວ່າທ່ານຈະໄດ້ວາງແຜນໃນການໃຊ້ບົດຮຽນເຫລົ່ານັ້ນ. ທ່ານບໍ່ຈຳເປັນທີ່ຈະໃຊ້ສິ່ງຂອງທີ່ໂຫລຫລາເພື່ອຈະໄດ້ເປັນຄູທີ່ດີເລີດ. ພຣະເຈົ້າຊົງໄດ້ສອນບົດຮຽນຂອງພຣະອົງຕາມສະພາບທີ່ຍາກຈົນ. ສິ່ງສຳຄັນທີ່ສຸດໃນການສອນຂອງທ່ານແມ່ນພຣະວິນຍານ. ການໃຊ້ສິ່ງຊ່ວຍເຫລືອທີ່ເຫມາະສົມກັບບົດຮຽນພ້ອມດ້ວຍການນຳພາຂອງພຣະວິນຍານ ຈະເປັນຜົນດີທີ່ສຸດຕໍ່ການຮ່ຳຮຽນພຣະກິດຕິຄຸນ.

## ເລີ້ມຕຽມໄວ້ແຕ່ດົນ

ໃຫ້ຕຽມບົດຮຽນຂອງທ່ານໄວ້ແຕ່ດົນ. ມັນຈະຊ່ວຍທ່ານໄດ້ຫລາຍຖ້າຫາກທ່ານຈະຕຽມບົດຮຽນຂອງທ່ານກ່ອນຢ່າງຫນ້ອຍສອງສາມອາທິດລ່ວງຫນ້າ. ການນີ້ຈະໃຫ້ເວລາທ່ານໄດ້ຄິດແລະອະທິຖານກ່ຽວກັບຫົວຂໍ້ບົດຮຽນແລະຈະໄດ້ຈັດຕຽມໄວ້ຢ່າງຮຽບຮ້ອຍຄົບຖ້ວນ.

## ເຈາະຈົງຢູ່ທີ່ຈຸດປະສົງຂອງບົດຮຽນ

ບົດຮຽນແຕ່ລະບົດທີ່ທ່ານສອນຄວນໃຫ້ມີຈຸດປະສົງ. ຕົວຢ່າງເຊັ່ນ, ຈຸດປະສົງຂອງບົດຮຽນທີ່ກ່ຽວກັບການອົດອາຫານແມ່ນເພື່ອຊ່ວຍຄົນໃນຫ້ອງຮຽນໃຫ້ເຂົ້າໃຈເຖິງພອນທີ່ມາເຖິງຈາກການອົດອາຫານຫລືເຖິງຄວາມສຳຄັນຂອງການອົດອາຫານສຳລັບຈຸດປະສົງບາງຢ່າງຫລືສຳລັບອາທິດທີ່ອົດອາຫານ. ການສເນີແລະການສົນທະນາໃນບົດຮຽນນີ້ຄວນເຈາະຈົງຢູ່ທີ່ຈຸດປະສົງນັ້ນ.

ໃນການຕັດສິນໃຈກ່ຽວກັບຈຸດປະສົງຂອງບົດຮຽນໃດບົດຮຽນນຶ່ງ, ທ່ານຄວນສຶກສາບົດຮຽນນັ້ນແລະສຶກສາພຣະຄັມພີນຳອີກ. ຂໍໃຫ້ພຣະເຈົ້າຊ່ວຍເຫລືອທ່ານໃຫ້ເຂົ້າໃຈຂ່າວສານທີ່ສຳຄັນທີ່ສຸດຈາກບົດຮຽນນັ້ນສຳລັບຜູ້ຄົນທີ່ທ່ານສອນ. ໃຫ້ຖາມຕົວເອງວ່າ, “ຈະມີຫຍັງເກີດຂຶ້ນກັບຊີວິດຂອງຄົນທີ່ເຮົາສອນເນື່ອງມາຈາກຜົນຂອງບົດຮຽນນີ້?” ຫລາຍໆບົດຮຽນໃນຫນັງສືທີ່ທາງສາສນາຈັກໄດ້ຈັດພິມຂຶ້ນມາໄດ້ມີປະໂຍກທີ່ເປັນຈຸດປະສົງບົ່ງໄວ້. ປະໂຍກເຫລົ່ານີ້ສາມາດຊ່ວຍທ່ານຕັດສິນໃຈໄດ້ວ່າບົດຮຽນນັ້ນຈະຊ່ວຍຄົນທີ່ທ່ານສອນໄດ້ແນວໃດ.

## ຕັດສິນໃຈກ່ຽວກັບສິ່ງທີ່ຈະສອນ

ຫລັງຈາກທ່ານໄດ້ຕັດສິນໃຈວ່າບົດຮຽນນັ້ນມີຈຸດປະສົງແນວໃດແລ້ວ, ໃຫ້ທ່ານຕັດສິນໃຈວ່າທ່ານຈະສອນຫລັກທັມໃນແບບໃດເພື່ອຄົນໃນຫ້ອງຮຽນທ່ານຈະເຂົ້າໃຈຈຸດປະສົງນັ້ນໄດ້. ມີຫນັງສືຫລາຍຫົວລວມທັງຂໍ້ພຣະຄັມພີ, ເຣື່ອງເລົ່າ, ແລະຂໍ້ມູນອື່ນໆຈະຊ່ວຍທ່ານສອນບົດຮຽນໄດ້. ສ່ວນຫລາຍແລ້ວບົດຮຽນເຫລົ່ານັ້ນຈະເຕັມໄປດ້ວຍເນື້ອເຣື່ອງຕ່າງໆຈົນທ່ານບໍ່ສາມາດຈະສອນໄດ້ຫມົດທຸກເຣື່ອງໃນເວລາທີ່ທ່ານມີ. ໃນກໍຣະນີເຊັ່ນນັ້ນ, ທ່ານຄວນເລືອກເອົາແຕ່ສິ່ງທີ່ທ່ານເຫັນວ່າຈະຊ່ວຍຄົນທີ່ທ່ານສອນໄດ້ຫລາຍທີ່ສຸດ. ໃຫ້ຖາມຕົວເອງວ່າ, “ຫລັກທັມແລະຄຳສອນຂໍ້ໃດທີ່ເຮົາຄວນເອົາໄປສອນ ເພື່ອມັນຈະໄດ້ຊ່ວຍຄົນໃນຫ້ອງໄດ້ ໃນການເອົາໄປແກ້ໄຂບັນຫາທີ່ເຂົາກຳລັງປະເຊີນຢູ່?”

ຖ້າທ່ານຕ້ອງການເນື້ອເຣື່ອງທີ່ບໍ່ໄດ້ເປັນໜັງສືຫລືພຣະຄັມພີ, ໃຫ້ທ່ານໃຊ້ເຣື່ອງເລົ່າແລະຄຳໃນ *ຂ່າວສານຂອງຝ່າຍປະທານສູງສຸດ*, *ຂ່າວການປ່ຽນສອນ*, ແລະວາຣະສານຂອງສາສນາຈັກ ໂດຍສະເພາະຂ່າວສານຈາກກອງປະຊຸມໃຫຍ່.

ໃນຂະນະທີ່ທ່ານຕັດສິນໃຈກ່ຽວກັບສິ່ງທີ່ຈະສອນ:

- ໃຫ້ສຶກສາເນື້ອເຣື່ອງຂອງບົດຮຽນດ້ວຍການອະທິຖານ.
- ໃຫ້ຂຽນຫລັກທັມຄຳສອນທີ່ສຳຄັນ ຊຶ່ງລວມຢູ່ນຳບົດຮຽນໄວ້.
- ໃຫ້ຈື່ຈຳໄວ້ສເມີເຖິງຄວາມຕ້ອງການແລະເບື້ອງຫລັງຂອງຜູ້ທີ່ທ່ານສອນ.
- ໃຫ້ເຮັດຕາມການດົນໃຈຂອງພຣະວິນຍານ.

ມັນຈະດີທີ່ສຸດ ຖ້າເຮົາຈະເຈາະຈົງໃສ່ແຕ່ຫລັກທັມພຽງຢ່າງດຽວຫລືສອງຢ່າງເທົ່ານັ້ນ.

## ຄິດຫາວິທີທີ່ຈະສອນ

ຫລັງຈາກທ່ານໄດ້ຕັດສິນໃຈວ່າຈະສອນສິ່ງໃດແລ້ວ, ທ່ານຄວນຄິດຫາວິທີທີ່ຈະສອນມັນ. ໃຫ້ສຶກສາບົດຮຽນແລະຄິດຫາວິທີທີ່ຈະນຳສເນີມັນໃຫ້ຜູ້ທີ່ທ່ານສອນ. ວິທີທີ່ທ່ານສອນນັ້ນ ຄວນສາມາດຊ່ວຍຜູ້ຮຽນໃຫ້ເຂົ້າໃຈແລະເອົາສິ່ງທີ່ທ່ານສອນໄປນຳໃຊ້ໄດ້.

ໃຫ້ສຶກສາພຣະຄັມພີ, ເຣື່ອງເລົ່າ, ແລະຂໍ້ມູນອື່ນໆທີ່ມີຢູ່ໃນບົດຮຽນຢ່າງຖີ່ຖ້ວນ ແລະໃຫ້ສຶກສາຂໍ້ພຣະຄັມພີອື່ນໆທີ່ຈະຊ່ວຍທ່ານສອນຫລັກທັມຄຳສອນນັ້ນໄດ້. ຈົ່ງຕຽມທີ່ຈະຊ່ວຍຄົນໃນຫ້ອງຮຽນໃຫ້ເຂົ້າໃຈວິທີທີ່ຈະເອົາຂໍ້ພຣະຄັມພີໄປນຳໃຊ້ໃນຊີວິດຂອງເຂົາເຈົ້າ (see 1 Nephi 19:23).

ພ້ອມນີ້ທ່ານກໍຄວນຄິດທີ່ຈະໃຊ້ເຣື່ອງເລົ່າແລະຕົວຢ່າງຈາກຊີວິດຂອງທ່ານເອງແລະຈາກຊີວິດຂອງຄົນໃນຫ້ອງທ່ານ. ຕົວຢ່າງເຊັ່ນ, ມີຊາຍໜຸ່ມຄົນນຶ່ງໄດ້ເຊົາສູບຢາຫລັງຈາກໄດ້ຮຽນກ່ຽວກັບພຣະວາຈາແຫ່ງປັນຍາຢູ່ໃນຫ້ອງຮຽນຖານະປະໂຣຫິດ ຊຶ່ງຄູສອນໄດ້ເລົ່າເຣື່ອງທີ່ຊ່ວຍໃຫ້ອ້າຍຂອງເພິ່ນສາມາດເຊົາສູບຢາໄດ້. ຕົວຢ່າງນີ້ໄດ້ບອກວ່າ ຄົນຕິດຢາສູບກໍສາມາດເຊົາໄດ້. ເມື່ອໄດ້ຍິນບົດຮຽນນັ້ນແລ້ວ ຊາຍໜຸ່ມຄົນນັ້ນກໍໄດ້ຕັດສິນໃຈວ່າ ລາວກໍສາມາດປ່ຽນແປງຊີວິດຂອງລາວໄດ້ເໝືອນກັນ.

ສຳລັບລາຍລະອຽດເພີ້ມເຕີມກ່ຽວກັບວິທີສອນ ຊຶ່ງຈະຊ່ວຍທ່ານສເນີບົດຮຽນຂອງທ່ານໄດ້, ໃຫ້ເບິ່ງໜ້າ ໑໔-໑໕ ໃນປຶ້ມຫົວນີ້.

## ວາງແຜນວິທີຈົບບົດຮຽນ

ພຣະຜູ້ຊ່ວຍໃຫ້ລອດມັກຈະກ່າວສລຸບສິ່ງທີ່ພຣະອົງໄດ້ສອນແລະໄດ້ຊຸກຍູ້ຜູ້ຄົນໃຫ້ເອົາມັນໄປນຳໃຊ້ໃນຊີວິດຂອງເຂົາເຈົ້າ (ເບິ່ງ ຄຳອຸປມາເຣື່ອງໄທຊາມາເຣັຽຜູ້ໃຈດີ, ລູກາ ໑໐:໓໐–໓໗). ເມື່ອເຖິງຕອນທ້າຍຂອງບົດຮຽນ, ທ່ານຄວນທົບທວນແລະສລຸບສິ່ງທີ່ທ່ານສອນໄປ. ໃຫ້ແນະນຳວິທີທີ່ຄົນໃນ

ຫ້ອງຮຽນ ຈະເອົາຫລັກທັມພຣະກິດຕິຄຸນຫລືຄຳສອນໄປໃຊ້, ແລະຂໍໃຫ້ເຂົາເຈົ້າແນະນຳວິທີເໝືອນກັນ. ຈົ່ງຊຸກຍູ້ເຂົາເຈົ້າໃຫ້ພະຍາຍາມເຮັດບາງຢ່າງທີ່ແນະນຳໄປນັ້ນພາຍໃນອາທິດທີ່ຈະມາເຖິງ. ໃນທ້າຍບົດຮຽນ, ທ່ານຄວນຖາມເຂົາເຈົ້າວ່າ ເຂົາເຈົ້າໄດ້ຮຽນຫຍັງແດ່ຈາກບົດຮຽນນັ້ນ.

ພວກນັກຮຽນໃນຫ້ອງຮຽນຂອງຄູສອນຄົນນຶ່ງໄດ້ຖືກແນະນຳໃຫ້ເຮັດສິ່ງໃດສິ່ງນຶ່ງທີ່ເປັນການຮັບໃຊ້ໃນແຕ່ລະວັນແລະບໍ່ໃຫ້ຄົນອື່ນຮູ້ພາຍໃນອາທິດນັ້ນ. ເມື່ອເຂົາເຈົ້າມາຫ້ອງຮຽນໃນອາທິດຕໍ່ມາ, ຄູສອນໄດ້ຂໍໃຫ້ເຂົາເຈົ້າລາຍງານການຮັບໃຊ້ນັ້ນຢ່າງສັ້ນໆ. ຫລາຍຄົນໄດ້ບອກເຖິງສິ່ງທີ່ເຂົາເຈົ້າໄດ້ເຮັດ ແລະເຖິງຄວາມສຸກທີ່ເຂົາເຈົ້າໄດ້ຮັບຈາກການນຳໃຊ້ບົດຮຽນນັ້ນ. ການລາຍງານທີ່ໄດ້ຮັບຜົນນັ້ນໄດ້ກະຕຸ້ນໃຫ້ຄົນໃນຫ້ອງຮຽນຄິດທີ່ຈະເຮັດການຮັບໃຊ້ເໝືອນກັນ.

# ການມີຄວາມເຂົ້າໃຈຄົນທີ່ທ່ານສອນ



ມັນສຳຄັນຫລາຍທີ່ທ່ານຈະເຂົ້າໃຈຄົນທີ່ທ່ານສອນ. ຈົ່ງຄິດເຖິງກະສຽນແລະປະສົບການຂອງຄົນໃນຫ້ອງຂອງທ່ານ. ຄົນທີ່ມີອາຍຸແຕກຕ່າງກັນ ຈະມີຄວາມຕ້ອງການທີ່ແຕກຕ່າງກັນ ແລະຈະຮຽນບໍ່ເຫມືອນກັນ.

## ເດັກນ້ອຍ

ເດັກນ້ອຍເປັນຜູ້ທີ່ກຳລັງເຕີບ ໂຕຂຶ້ນທາງຮ່າງກາຍ, ທາງສັງຄົມ, ທາງອາລົມ, ແລະທາງຈິດໃຈ. ໃນຂະນະທີ່ທ່ານຕຽມບົດຮຽນຂອງທ່ານ, ຈົ່ງນຶກເຖິງພອນສວັນ, ຄວາມສາມາດ, ແລະຄວາມຕ້ອງການຂອງເດັກແຕ່ລະຄົນ.

ເດັກຈະມັກຫລາຍສິ່ງຫລາຍຢ່າງ. ທ່ານຄວນໃຊ້ເຣື່ອງສັ້ນໆ, ເກມທີ່ງ່າຍໆ, ຮູບພາບ, ບົດຮຽນທີ່ໃຊ້ວັດຖຸ, ແລະເພງທີ່ຈະໃຫ້ເຂົາເຈົ້າມີຄວາມສົນໃຈນຳບົດຮຽນ.

ເດັກນ້ອຍເປັນຜູ້ທີ່ຫາກໍໄດ້ຮຽນກ່ຽວກັບການແບ່ງປັນ, ການມີຄວາມເມດຕາ, ແລະການມີຄວາມອົດທົນ. ຈົ່ງຊ່ວຍເຂົາເອົາຊະນະຄວາມອ່ອນແອຂອງເຂົາໃນເຣື່ອງນີ້ ໂດຍການເຕືອນເຂົາເຖິງຕົວຢ່າງຂອງພຣະເຢຊູ ແລະຊຸກຍູ້ເຂົາໃຫ້ກະທຳຕາມພຣະອົງ.

ເດັກນ້ອຍເປັນຄົນໄວ້ວາງໃຈແລະເຊື່ອໄວ. ເຂົາຈະເຊື່ອສິ່ງທີ່ທ່ານສອນເຂົາ. ເຂົາຍັງຈະເບິ່ງແລະເຮັດຕາມຕົວຢ່າງຂອງທ່ານນຳອີກ.

# ຄົນໜຸ່ມ

ຄົນທີ່ມີອາຍຸລະຫວ່າງເດັກແລະຜູ້ໃຫຍ່ເປັນວັຍທີ່ຫຍຸ້ງຍາກແລະມີສິ່ງທ້າທາຍຫລາຍທີ່ສຸດ. ສະມາຊິກໃນຫ້ອງບາງຄົນອາດມີຄວາມຮັບຜິດຊອບທີ່ບ້ານ, ທີ່ໂຮງຮຽນ, ແລະທີ່ບ່ອນທຳງານ. ຂໍ້ແນະນຳດັ່ງຕໍ່ໄປນີ້ສາມາດຊ່ວຍທ່ານໃຫ້ຝຶກຝົນຄົນໜຸ່ມໃຫ້ເປັນຄົນດີໄດ້.

ຕຽມບົດຮຽນອັນທີ່ກ່ຽວເນື່ອງກັບຊີວິດຂອງເຂົາ. ໃຫ້ຊ່ວຍເຂົາເຫັນວິທີທີ່ຄຳສອນນັ້ນຕອບຄຳຖາມຂອງເຂົາ ແລະຊ່ວຍເຂົາເລືອກທາງດີໄດ້.

ຄົນໜຸ່ມສາວອາດມີຄວາມຮູ້ສຶກເປົ່າປ່ຽວດຽວດາຍ ຫລືຄິດວ່າຄົນອື່ນບໍ່ເຫັນຄຸນຄ່າຂອງເຂົາ. ຈົ່ງຊ່ວຍແຕ່ລະຄົນໃຫ້ຮູ້ສຶກວ່າເຂົາເປັນຜູ້ສຳຄັນໃນຫ້ອງຂອງທ່ານ. ການຮູ້ສຶກວ່າເຂົາມີໝູ່ໃນຫ້ອງຮຽນແລະມີຄວາມຮູ້ກ່ຽວກັບພຣະກິດຕິຄຸນ ຈະຊ່ວຍເຂົາໃຫ້ເຂັ້ມແຂງຂຶ້ນທາງວິນຍານ ແລະຮັກສາຕົນໃຫ້ບໍຣິສຸດ.

ຈົ່ງສະແດງໃຫ້ເຂົາເຫັນວ່າທ່ານສົນໃຈໃນຄວາມຄິດຄວາມເຫັນຂອງເຂົາ. ຈົ່ງຊຸກຍູ້ເຂົາໃຫ້ມີສ່ວນຮ່ວມໃນບົດຮຽນແລະບອກເຖິງແນວຄິດທີ່ເຂົາມີຕໍ່ທ່ານຫລືຕໍ່ຄົນໃນຫ້ອງດຽວກັນ.



## ຜູ້ໃຫຍ່

ໃນຫ້ອງຮຽນຂອງຜູ້ໃຫຍ່ຈະມີຄົນທີ່ມີອາຍຸທີ່ແຕກຕ່າງກັນ ແລະມີເບື້ອງຫລັງແລະປະສົບການທີ່ບໍ່ເຫມືອນກັນ. ຈົ່ງໃຊ້ຄວາມແຕກຕ່າງນີ້ເພື່ອເພີ້ມພູນຄວາມຮູ້ໃຫ້ຄົນໃນຫ້ອງຂອງທ່ານ. ຈົ່ງຊຸກຍູ້ເຂົາເຈົ້າໃຫ້ແບ່ງປັນຄວາມຮູ້ທີ່ເຂົາໄດ້ຮຽນມາຈາກປະສົບການຂອງເຂົາ. ທ່ານຄວນນໍາໃຊ້ພອນສວັນທີ່ແຕກຕ່າງກັນຂອງເຂົາເຈົ້ານັ້ນ.

ໃຫ້ສອນເຖິງຄວາມຈິງຂອງພຣະກິດຕິນຄຸນໃນທາງທີ່ເຂົາເຈົ້າຈະເຂົ້າໃຈໄດ້. ພຣະວິນຍານບໍຣິສຸດຈະຊ່ວຍຄົນໃນຫ້ອງໃຫ້ເຂົ້າໃຈແລະເອົາຄວາມຈິງນັ້ນໄປນໍາໃຊ້ໃນຊີວິດຂອງເຂົາ.

# ຣາງວັນທີ່ມາຈາກການສອນ



ໃນຖານະເປັນຄູສອນ, ທ່ານຈະມີຄວາມຊື່ນຊົມຊື່ງມາຈາກການຊ່ວຍຄົນອື່ນໃຫ້ມີຄວາມຮູ້ຫລາຍຂຶ້ນກ່ຽວກັບພຣະກິດຕິຄຸນ. ຄວາມພະຍາຍາມແລະສັດທາຂອງທ່ານທີ່ຈະສອນພຣະກິດຕິຄຸນ ຈະຊ່ວຍຄົນອື່ນພັດທະນາປະຈັກພະຍານຂອງເຂົາໃຫ້ເຂັ້ມແຂງຫລາຍຂຶ້ນກ່ຽວກັບພຣະຜູ້ຊ່ວຍໃຫ້ລອດ ແລະພະຍາຍາມດຳລົງຊີວິດຕາມພຣະບັນຍັດ.

ຄູສອນຫ້ອງຮຽນວັນອາທິດຄົນນຶ່ງເປັນຫ່ວງວ່າ ມີຫລາຍຄົນຢູ່ໃນຫ້ອງທີ່ສາມາດສອນໄດ້ດີກວ່າລາວ. ລາວຄິດຢ້ານວ່າການສອນຂອງລາວຈະບໍ່ໄດ້ຜົນ. ແລ້ວວັນນຶ່ງ ມີສະມາຊິກຄົນນຶ່ງໄດ້ມາຂໍເວົ້ານຳລາວເປັນສ່ວນຕົວ. ນາງເວົ້າວ່າ ເພາະສິ່ງທີ່ສາມີຂອງນາງໄດ້ຮຽນຈາກຫ້ອງລາວ, ບັດນີ້ລາວໄດ້ເລີ້ມຈັດໃຫ້ມີການອະທິຖານເປັນຄອບຄົວ. ລາວຍັງສັນຍາວ່າຈະພະຍາຍາມໄປພຣະວິຫານໃຫ້ໄດ້ ເພື່ອຈະໄດ້ຜະນຶກເຂົ້າກັບຄອບຄົວຂອງລາວ. ນາງໄດ້ກ່າວຄຳຂອບອົກຂອບໃຈຄູສອນທີ່ໄດ້ເຊື້ອເຊີນພຣະວິນຍານໃຫ້ມາຢູ່ໃນຫ້ອງຮຽນຂອງເຂົາເຈົ້າ. ແລ້ວຫົວໃຈຂອງຄູຄົນນັ້ນເຕັມໄປດ້ວຍຄວາມຖ່ອມ, ແລ້ວລາວຈິ່ງເຂົ້າໃຈເຖິງຈຸດປະສົງອັນແທ້ຈິງແລະເຖິງຣາງວັນທີ່ມາຈາກການສອນຂອງລາວ.

ເມື່ອທ່ານສອນ, ທ່ານຈະໄດ້ຮັບພອນເທົ່າໆກັບຄົນທີ່ຮຽນ. ຄວາມຮູ້ຂອງທ່ານກ່ຽວກັບພຣະກິດຕິຄຸນ ແລະປະຈັກພະຍານຂອງທ່ານເຖິງພຣະຜູ້ຊ່ວຍໃຫ້ລອດຈະເພີ້ມຫລາຍຂຶ້ນເມື່ອທ່ານສຶກສາ, ຈັດຕຽມ, ແລະສອນບົດຮຽນຂອງທ່ານ. ທ່ານຈະຮູ້ສຶກເຖິງຄວາມຮັກຂອງຄົນອື່ນ. ທ່ານຈະຮູ້ສຶກເຖິງພຣະວິນຍານທີ່ຫລັ່ງໄຫລເຂົ້າສູ່ຊີວິດຂອງທ່ານເມື່ອທ່ານຖ່ອມຕົນແລະພະຍາຍາມທີ່ຈະດຳລົງຊີວິດຕາມສິ່ງທີ່ທ່ານສອນ. ຊີວິດຂອງທ່ານຈະສົມບູນຫລາຍຂຶ້ນຈາກການຮັບໃຊ້ເປັນຄູສອນຂອງທ່ານ.

# ການດູແລພັດທະນາຄູສອນໃນສາຂາ



ຝ່າຍປະທານສາຂາມີໜ້າທີ່ຮັບຜິດຊອບສຳລັບຄຸນນະພາບຂອງການສອນໃນສາຂາ.

## ໜ້າທີ່ຮັບຜິດຊອບຂອງຜູ້ດູແລການພັດທະນາຄູສອນ

ເມື່ອສະມາຊິກໃນສາຂາເພີ່ມທະວີຂຶ້ນ, ຄົນນຶ່ງໃນຝ່າຍປະທານສາຂາຈະເອີ້ນແລະແຕ່ງຕັ້ງຄົນນຶ່ງໃຫ້ເປັນຜູ້ດູແລການພັດທະນາຄູສອນ ເພື່ອຈະໄດ້ຄວບຄຸມການສອນຂອງຄູ. ຜູ້ດູແລການພັດທະນາຄູສອນຈະເປັນຊາຍຫລືຍິງກໍໄດ້. ລາວຈະເປັນຄົນນຶ່ງໃນຜູ້ນຳປະຈຳສາຂາ ແລະຮັບໃຊ້ເປັນແຫລ່ງໃຫ້ຜູ້ນຳຖານະປະໂຣຫິດແລະຜູ້ນຳໃນອົງການຕ່າງໆແລະຄູສອນ ໃນການປັບປຸງການສອນພຣະກິດຕິຄຸນຂອງເຂົາເຈົ້າ. ຜູ້ດູແລການພັດທະນາຄູສອນຈະຊ່ວຍຜູ້ນຳວາງແຜນແລະຄວບຄຸມຫ້ອງຮຽນພັດທະນາຄູສອນ ແລະເມື່ອຖືກຂໍຮ້ອງ ຜູ້ດູແລການພັດທະນາຄູສອນກໍຈະສອນຫ້ອງຮຽນພຣະກິດຕິຄຸນນຳອີກ.

## ການສະໜັບສະໜູນຂອງຜູ້ນຳຕໍ່ຄູສອນ

ຜູ້ນຳຖານະປະໂຣຫິດແລະຜູ້ນຳອົງການຕ່າງໆມີໜ້າທີ່ຮັບຜິດຊອບໃນຄຸນນະພາບຂອງການສອນພຣະກິດຕິຄຸນໃນອົງການຂອງຕົນ. ຜູ້ນຳຄວນເຮັດຕາມການສອນອັນດີເລີດແລະຊ່ວຍຄູສອນໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງໜ້າທີ່ຂອງເຂົາເຈົ້າ. ຜູ້ນຳຄວນຂອບອົກຂອບໃຈ, ຊ່ວຍເຫລືອ, ແລະໃຫ້ກຳລັງໃຈຕໍ່ ຄູສອນຂອງຕົນ. ການສອນໃນສາສນາຈັກຈະດີເດັ່ນຂຶ້ນໄປເລື້ອຍໆ ເມື່ອຜູ້ນຳໃຫ້ການສະໜັບສະໜູນແລະ ໃຫ້ກຳລັງໃຈຕໍ່ຄູສອນໃນອົງການຂອງຕົນ.

## ຫ້ອງຮຽນພັດທະນາຄູສອນ

ຜູ້ນຳຖານະປະໂຣຫິດແລະຜູ້ນຳອົງການຕ່າງໆແລະຄູສອນຄວນໄປຮ່ວມຫ້ອງຮຽນພັດທະນາຄູສອນຄັ້ງໜຶ່ງ ທຸກໆສາມເດືອນ ເພື່ອຈະໄດ້ຮຽນຫລັກການ, ວິທີ, ແລະຄວາມຊ່ຽວຊານ ເພື່ອຈະໄດ້ປັບປຸງການສອນພຣະກິດຕິຄຸນໃຫ້ດີຂຶ້ນ. ຜູ້ດູແລການພັດທະນາຄູສອນຈະເປັນຜູ້ຈັດຫ້ອງຮຽນຂຶ້ນແລະວາງແຜນກັບຜູ້ນຳຖານະປະໂຣຫິດແລະຜູ້ນຳອົງການຕ່າງໆ. ຫ້ອງຮຽນນີ້ຄວນຈັດຂຶ້ນໃນເວລາທີ່ເໝາະສົມສຳລັບຄູສອນແລະຜູ້ນຳ ແຕ່ບໍ່ໃຫ້ຂັດກັບການປະຊຸມໃນວັນອາທິດ. ຕາມທຳມະດາແລ້ວ, ຫ້ອງຮຽນພັດທະນາຄູສອນບໍ່ຄວນເກີນໜຶ່ງຊົ່ວໂມງ.

ຫ້ອງຮຽນພັດທະນາຄູສອນຄວນບັນຈຸສິ່ງຕໍ່ໄປນີ້:

- ຂ່າວສານສັ້ນໆຈາກຄົນໜຶ່ງໃນຝ່າຍປະທານສາຂາ ຫລືຜູ້ນຳຖານະປະໂຣຫິດ ຫລືຜູ້ນຳອົງການກ່ຽວກັບຫລັກການຂອງການສອນຫລືການຮຽນ.
- ການສະແດງເຖິງວິທີການສອນຫລືຄວາມຊ່ຽວຊານທາງດ້ານການສອນໂດຍຜູ້ນຳຖານະປະໂຣຫິດ ຫລືຜູ້ນຳອົງການຫລືຄູສອນ.
- ໃຫ້ເວລາແກ່ຄູສອນແລະຜູ້ນຳທີ່ຈະໄດ້ແບ່ງປັນຄວາມຄິດຄວາມເຫັນແລະສົນທະນາເຖິງວິທີທີ່ຈະຊ່ວຍສະມາຊິກບາງຄົນໃນຫ້ອງຮຽນ.

ເມື່ອມີຈຳນວນຂອງຄູສອນແລະຜູ້ນຳຫລາຍຂຶ້ນໃນສາຂາ, ຄວນຈັດຫ້ອງຮຽນພັດທະນາຄູສອນຂຶ້ນຄັ້ງໜຶ່ງ ໃນທຸກໆສາມເດືອນສຳລັບ:

- ຄູສອນແລະຜູ້ນຳຂອງສະມາຊິກທີ່ມີອາຍຸ ໑໒ ແລະສູງກວ່ານັ້ນ.
- ຄູສອນແລະຜູ້ນຳຂອງສະມາຊິກທີ່ມີອາຍຸ ໑໘ ຫາ ໑໗ ປີ.
- ຄູສອນແລະຜູ້ນຳໃນຊັ້ນປະຖົມວັຍ.

ຫ້ອງຮຽນເຫລົ່ານີ້ຄວນຈັດຂຶ້ນແບບປ່ຽນຜຽນກັນໄປແຕ່ລະເດືອນ.

## ການສອນຫ້ອງຮຽນພຣະກິດຕິຄຸນ

ຫ້ອງຮຽນພຣະກິດຕິຄຸນ ຈະຊ່ວຍເປັນພື້ນຖານໃຫ້ສະມາຊິກກາຍເປັນຄູສອນເຣື່ອງພຣະກິດຕິຄຸນໄດ້ດີຂຶ້ນກວ່າເກົ່າຢູ່ໃນບ້ານແລະຢູ່ໃນໂບດ. ໂຄງຮ່າງສຳລັບຫ້ອງຮຽນເຫລົ່ານີ້ແມ່ນມີຢູ່ໃນໜ້າ ໔໙-໕໐ ໃນປຶ້ມຫົວນີ້. ຜູ້ດູແລການພັດທະນາຄູສອນຈະເປັນຄົນສອນເອງ ຍົກເວັ້ນແຕ່ຝ່າຍປະທານສາຂາໄດ້ແຕ່ງຕັ້ງໃຫ້ສະມາຊິກຄົນອື່ນໃນສາຂາມາເປັນຄົນສອນ.

ຝ່າຍປະທານສາຂາຈະເຊື້ອເຊີນສະມາຊິກໃຫ້ໄປຮ່ວມຫ້ອງຮຽນ. ຕາມທຳມະດາແລ້ວ, ຫ້ອງຮຽນນັ້ນຈະມີສະມາຊິກບໍ່ເກີນສິບຄົນໃນການສອນແຕ່ລະຄັ້ງ ເພື່ອຈະໃຫ້ໂອກາດສະມາຊິກທຸກຄົນໃນຫ້ອງຮຽນໄດ້ມີສ່ວນຮ່ວມຢ່າງເຕັມສ່ວນ.

# ໂຄງຮ່າງສຳລັບຫ້ອງຮຽນພັດທະນາຄູສອນ

ຫ້ອງຮຽນພັດທະນາຄູສອນຈະໃຫ້ໂອກາດສະມາຊິກທຸກຄົນຂອງສາສນາຈັກໃຫ້ຮຽນຮູ້ວິທີທີ່ຈະກາຍເປັນຄູສອນທີ່ດີກວ່າເກົ່າ. ຄູສອນຫ້ອງຮຽນນີ້ອາດເປັນຜູ້ດູແລການພັດທະນາຄູສອນຫລືເປັນຄູສອນທີ່ເຄີຍມີປະສົບການມາແລ້ວເລື່ອງການສອນ ທີ່ປະທານສາຂາຂໍໃຫ້ມາສອນ. ຫ້ອງຮຽນນີ້ສາມາດຈັດຂຶ້ນໃນລະຫວ່າງຊົ່ວໂມງໂຮງຮຽນວັນອາທິດຫລືໃນເວລາອື່ນທີ່ຜູ້ຄົນສາມາດໄປຮຽນ. ຖ້າຫ້ອງຮຽນຖືກຈັດຂຶ້ນສຳລັບຜູ້ນຳແລະຄູສອນສະເພາະອົງການໃດອົງການນຶ່ງ, ເຂົາເຈົ້າສາມາດຈັດຂຶ້ນໄດ້ໃນຊົ່ວໂມງການປະຊຸມຜູ້ນຳ. ຖ້າຫາກເຂົາເຈົ້າອາສັຍຢູ່ຫ່າງໄກຈາກໂບດຫລືບໍ່ສາມາດຈັດຂຶ້ນໃນລະຫວ່າງຊົ່ວໂມງໂຮງຮຽນວັນອາທິດໄດ້, ເຂົາເຈົ້າກໍສາມາດຈັດຫ້ອງຮຽນຢູ່ເຮືອນໃດເຮືອນນຶ່ງເປັນບາງຄັ້ງແລະຈັດຂຶ້ນໃນໂບດເປັນບາງຄັ້ງກໍໄດ້.

ແນວຄິດຊ່ວຍເຫລືອສຳລັບແຕ່ລະບົດຮຽນກໍມີຈັດໄວ້ໃນປຶ້ມຫົວນີ້. ເມື່ອຄູສອນຕຽມບົດຮຽນຂອງຕົນ, ລາວຄວນໃຊ້ສິ່ງທີ່ຢູ່ໃນຫົວຂໍ້ "ການໃຊ້ວິທີສອນໃນຫລາຍແບບ." ໃນທ້າຍຂອງແຕ່ລະບົດ, ຄູສອນຄວນຊຸກຍູ້ຄົນໃນຫ້ອງຮຽນໃຫ້ເອົາສິ່ງທີ່ເຂົາໄດ້ຮຽນໃນວັນນັ້ນໄປນຳໃຊ້, ບໍ່ວ່າຈະໃຊ້ຢູ່ໃນໂບດຫລືຢູ່ໃນການສັງສັນໃນຄອບຄົວຂອງເຂົາເຈົ້າກໍຕາມ. ການນີ້ຈະຊ່ວຍເຂົາເຈົ້າຂຍາຍຄວາມສາມາດຂອງການເປັນຄູສອນຂອງເຂົາເຈົ້າຫລາຍຂຶ້ນ. ຍົກເວັ້ນແຕ່ໃນກໍຣະນີພິເສດເທົ່ານັ້ນ, ຕາມປົກກະຕິແລ້ວຫ້ອງຮຽນພັດທະນາຄູສອນນີ້ ຈະຈັດຂຶ້ນເປັນເວລາແປດອາທິດ ຕາມທີ່ບົ່ງໄວ້ຢູ່ຂ້າງຫລຸ່ມນີ້. ຄຳແນະນຳຂ້າງຫລຸ່ມນີ້ແມ່ນສຳລັບຄູສອນຫ້ອງຮຽນພັດທະນາຄູສອນ.

## ອາທິດທີນຶ່ງ

ມອບປຶ້ມນີ້ໃຫ້ແຕ່ລະຄົນທີ່ຢູ່ໃນຫ້ອງ ແລະທົບທວນຫົວຂໍ້ຕ່າງໆ. ໃຫ້ເຈາະຈົງໃສ່ຄຳນຳແລະຫົວຂໍ້ "ການຕຽມຕົວເອງທາງວິນຍານ." ໃຫ້ເນັ້ນຫນັກເຖິງຄວາມສຳຄັນຂອງການໄດ້ຮັບການແຕ່ງຕັ້ງແລະການດຳລົງຊີວິດຕາມພຣະກິດຕິຄຸນ ເພື່ອຈະໄດ້ມີຄ່າຄວນພໍທີ່ຈະມີພຣະວິນຍານຢູ່ນຳ.

## ອາທິດທີສອງ

ໃຫ້ເຈາະຈົງໃສ່ພາກ "ຮັກຜູ້ທີ່ເຮົາສອນ," ຢູ່ໃນກ້ອງຫົວຂໍ້ "ການສອນຢ່າງທີ່ພຣະເຢຊູຊົງສອນ." ພ້ອມນີ້ ໃຫ້ທ່ານອ່ານກ່ຽວກັບບຸກຄະລິກລັກສະນະຂອງຜູ້ຄົນນຳອີກ ໃນຫນ້າ ໔໑-໔໖ ໃນປຶ້ມຫົວນີ້. ຂໍໃຫ້ຄົນໃນຫ້ອງແບ່ງປັນປະສົບການກ່ຽວກັບວ່າການເຂົ້າໃຈແລະການຊ່ວຍເຫລືອຄົນໃນຄອບຄົວຫລືຄົນໃນຫ້ອງດຽວກັນດ້ວຍຄວາມຮັກໄດ້ເປັນຜົນດີແນວໃດ. ທ່ານຄວນສົນທະນາວິທີທີ່ຄູສອນສາມາດຊ່ວຍເຫລືອສະມາຊິກແຕ່ລະຄົນໄດ້ຕາມແຕ່ຄວາມຕ້ອງການຂອງເຂົາ, ໂດຍສະເພາະສະມາຊິກໃຫມ່ແລະສະມາຊິກທີ່ພິການ.

## ອາທິດທີສາມ

ໃຫ້ເຈາະຈົງໃສ່ພາກ "ສອນຄວາມຈິງຂອງພຣະກິດຕິຄຸນ," ຢູ່ໃນກ້ອງຫົວຂໍ້ "ການສອນຢ່າງທີ່ພຣະເຢຊູຊົງສອນ." ໃຫ້ເນັ້ນໜັກເຖິງຄວາມສຳຄັນທີ່ຈະສອນຫລັກທັມດ້ວຍຄວາມຊື່ສັດ, ດ້ວຍຄວາມແຈ່ມແຈ້ງ, ດ້ວຍຄຳງ່າຍທີ່ຈະເຂົ້າໃຈ, ດ້ວຍການໃຊ້ພຣະຄັມພີໃນການສອນ, ແລະດ້ວຍການວາງແຜນໃຫ້ມີການສຶກສາເປັນສ່ວນຕົວ.

## ອາທິດທີສີ່

ໃຫ້ເຈາະຈົງໃສ່ພາກ "ສອນໂດຍພຣະວິນຍານ," ຢູ່ໃນກ້ອງຫົວຂໍ້ "ການສອນຢ່າງທີ່ພຣະເຢຊູຊົງສອນ." ໃຫ້ຊ່ວຍຄົນໃນຫ້ອງໃຫ້ຮູ້ສຶກວ່າເຂົາເຈົ້າມີຄ່າຄວນພໍທີ່ຈະມີພຣະວິນຍານຢູ່ນຳໃນການສອນຂອງເຂົາເຈົ້າ. ໃຫ້ຊ່ວຍເຂົາເຈົ້າຮູ້ສຶກເຖິງພຣະວິນຍານແລະກະທຳຕາມ.

## ອາທິດທີຫ້າ

ໃຫ້ເຈາະຈົງໃສ່ພາກ "ຊອກຫາວິທີສອນຜູ້ຄົນໃຫ້ຮ່ຳຮຽນຢ່າງພາກພຽນ" ຢູ່ໃນກ້ອງຫົວຂໍ້ "ການສອນຢ່າງທີ່ພຣະເຢຊູຊົງສອນ." ໃຫ້ເນັ້ນໜັກວິທີທີ່ຄູສອນສາມາດຊ່ວຍຜູ້ທີ່ເຂົາເຈົ້າສອນໃຫ້ຮັບເອົາໜ້າທີ່ທີ່ຈະຮຽນພຣະກິດຕິຄຸນແລະດຳລົງຊີວິດຕາມນັ້ນຫລາຍຂຶ້ນ.

## ອາທິດທີຫົກ

ໃຫ້ເຈາະຈົງໃສ່ພາກ "ການສ້າງບັນຍາກາດໃນຫ້ອງຮຽນ" ຢູ່ໃນກ້ອງຫົວຂໍ້ "ການສອນຢ່າງທີ່ພຣະເຢຊູຊົງສອນ." ໃຫ້ຊ່ວຍຄົນໃນຫ້ອງໃຫ້ເຂົ້າໃຈວິທີທີ່ຈະຊ່ວຍສ້າງບັນຍາກາດໃນຫ້ອງຮຽນເພື່ອໃຫ້ເປັນບ່ອນທີ່ທຸກຄົນຢາກມີສ່ວນຮ່ວມແລະຢາກຮຽນ.

## ອາທິດທີເຈັດ

ໃຫ້ເຈາະຈົງໃສ່ພາກ "ການໃຊ້ວິທີສອນໃນຫລາຍແບບ." ການຈັດບົດຮຽນໃຫ້ໄດ້ຜົນຈະຕ້ອງໄດ້ໃຊ້ຫົວຄິດແລະການຮູ້ປະດິດຄິດສ້າງ, ແລະຂໍ້ຄວາມໃນພາກນີ້ສາມາດຊ່ວຍທ່ານໄດ້ຫລາຍ. ຂໍໃຫ້ຄົນໃນຫ້ອງສະແດງຫລືແບ່ງປັນປະສົບການທີ່ເຂົາມີຕາມວິທີການສອນ ຊຶ່ງບົ່ງໄວ້ໃນພາກນີ້.

## ອາທິດທີແປດ

ໃຫ້ເຈາະຈົງໃສ່ພາກ "ການຕຽມບົດຮຽນຂອງທ່ານ." ຈົ່ງຊ່ວຍຄົນໃນຫ້ອງໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການຈັດຕຽມບົດຮຽນໄວ້ແຕ່ດົນ, ແລະໃຫ້ສົນທະນາວິທີທີ່ຈະຈັດແລະສເນີບົດຮຽນຢ່າງໄດ້ຜົນ.

ໃນເວລາອັນເໝາະສົມລະຫວ່າງການພັດທະນາຄູສອນນີ້, ທ່ານຄວນເນັ້ນໜັກເນື້ອຄວາມໃນພາກ "ຮາງວັນທີ່ມາຈາກການສອນ." ຂໍໃຫ້ຄົນໃນຫ້ອງເລົ່າເຖິງວິທີທີ່ຄູສອນໄດ້ຊ່ວຍຊີວິດຂອງເຂົາເຈົ້າແນວໃດ ແລະຕົວເຂົາເຈົ້າໃນຖານະເປັນຄູສອນກໍສາມາດຊ່ວຍເຫລືອຄົນອື່ນໄດ້ແນວໃດ.

ຫລັງຈາກຈົບຫ້ອງຮຽນແລ້ວ, ຈົ່ງຊຸກຍູ້ຜູ້ມາຮຽນໃຫ້ພະຍາຍາມເປັນຄູສອນທີ່ດີໄປເລື້ອຍໆ. ຖ້າເຂົາເຈົ້າຫາກໍໄດ້ຮັບຕຳແໜ່ງເປັນຄູສອນໃໝ່, ຜູ້ນຳຖານະປະໂຣຫິດຫລືຜູ້ນຳຂອງອົງການຄວນຫາເວລາເວົ້າລົມກັບເຂົາເຈົ້າ ເພື່ອຈະໄດ້ບອກເຂົາເຈົ້າໃຫ້ຮູ້ເລັກນ້ອຍກ່ຽວກັບຫ້ອງຮຽນແລະຄົນໃນຫ້ອງທີ່ເຂົາເຈົ້າຈະສອນນັ້ນ. ຫລັງຈາກນັ້ນ, ເຂົາເຈົ້າພຽງແຕ່ຕ້ອງໄດ້ລາຍງານເປັນລະຍະເຖິງຄວາມຕ້ອງການແລະບັນຫາຕ່າງໆ ກັບຜູ້ນຳຖານະປະໂຣຫິດ ຫລືຜູ້ນຳຂອງອົງການ. ເຂົາເຈົ້າສາມາດເຊື້ອເຊີນຜູ້ນຳຄົນໃດຄົນນຶ່ງມາຢ້ຽມຢາມຫ້ອງຮຽນແລະຊ່ວຍເຂົາເຈົ້າໄດ້. ຜູ້ດູແລການພັດທະນາຄູສອນກໍສາມາດໃຫ້ຄຳແນະນຳແກ່ຄູສອນທຸກຄົນໄດ້ສເມີ—ສຳລັບຜູ້ທີ່ຖືກເອີ້ນໃຫ້ສອນຕາມຫ້ອງຮຽນຕ່າງໆໃນໂບດແລະຜູ້ທີ່ສອນໃນຄອບຄົວຂອງຕົນ ແລະຜູ້ທີ່ໄດ້ຮັບໜ້າທີ່ເປັນຜູ້ນຳຕ່າງໆ.

# ການສັ່ງຈອງອຸປກອນການສອນຂອງສາສນາຈັກແລະການຊອກຫາລາຍລະອຽດກ່ຽວກັບລຳດັບເຊື້ອສາຍ

ຜູ້ນຳໃນສາຂາແລະສະມາຊິກຄົນອື່ນໆກໍສາມາດສັ່ງຈອງອຸປກອນການສອນຂອງສາສນາຈັກໄດ້ ລວມທັງ ພຣະຄັມພີ, ປື້ມບົດຮຽນ, ວາຣະສານຂອງສາສນາຈັກ, ເສື້ອຜ້າສັກສິດ (garments), ແລະເຄື່ອງນຸ່ງໃນພຣະວິຫານ ຈາກສູນຈຳໜ່າຍຂອງສາສນາຈັກ ຫລືຈາກຫ້ອງການຮັບໃຊ້, ຈາກສູນຈຳໜ່າຍທີ່ເມືອງຊອລເລັກ ຫລືຜ່ານທາງ Church's family history Internet site, ທີ່ www.familysearch.org.

ລາຍລະອຽດກ່ຽວກັບການຄົ້ນຄວ້າລຳດັບເຊື້ອສາຍກໍມີໃຫ້ໃຊ້ຜ່ານທາງ Church's family history Internet site, ທີ່ www.familysearch.org.

THE CHURCH OF
JESUS CHRIST
OF LATTER-DAY SAINTS

LAOTIAN
4 02345 95331 5
34595 331